# ຜູ້ແທນປະຊາຊົນ
# PHOUTHEN PASAXON

9-10 ພະຈິກ 2021
ປີທີ 10
ສະບັບທີ 793

ສຽງຂອງສະພາແຫ່ງຊາດ
ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ເດີ່ນທາດຫຼວງ ຕູ້ ປ.ນ 662 ໂທລະສັບ ແລະ ໂທລະສານ: 413522, 454563 Email: phouthen.na@gmail.com


## ສສຊ ປະກອບຄຳເຫັນໃສ່ບົດລາຍງານ ຂອງສານ, ໄອຍະການ ແລະ ສພຊ



(ສພຊ) ວັນທີ 8 ພະຈິກ 2021 ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX, ໂດຍການເປັນປະທານກອງປະຊຸມຂອງຄະນະປະທານຄະນະປະຈຳສະພາແຫ່ງຊາດ (ດ້ວຍຮູບແບບກອງປະຊຸມທາງໄກ). ໃນວາລະພາກເຊົ້າ ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ສືບຕໍ່ປະກອບຄຳເຫັນຕໍ່ບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ. ພ້ອມນັ້ນ, ທ່ານ ນາງ ວຽງທອງ ສີພັນດອນ ປະທານສານປະຊາຊົນສູງສຸດ, ທ່ານ ໄຊຊະນະ ໂຄດພູທອນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ທ່ານ ໄພວີ ສີບົວລີພາ ລັດຖະມົນຕີກະຊວງຍຸຕິທຳ ແລະ ທ່ານ ພົຕ. ກົງທອງ ພົງວິຈິດ ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ກໍໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາທີ່ ສສຊ ໃຫ້ຄວາມສົນໃຈ. ຈາກນັ້ນ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ຫົວໜ້າກອງເລຂານຸການກອງປະຊຸມ, ເລຂາທິການສະພາແຫ່ງຊາດ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ 2 ສະບັບຄື: 1). ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ແຜນການປະຈຳປີ 2022; 2). ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວ

ອ່ານຕໍ່ໜ້າ 2

## ຄປຈ.ສພຊ ລາຍງານກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງ ສພຊ

ໃນວັນທີ 8 ພະຈິກ 2021 ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ (ຄປຈ.ສພຊ) ຕາງໜ້າ (ຄປຈ.ສພຊ) ໄດ້ລາຍງານກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2022 ຂອງສະພາແຫ່ງຊາດ (ສພຊ) ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ວ່າ: ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ມາດຕາ 59, ຂໍ້ທີ 4 ກ່ຽວກັບການລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງ ສພຊ ປະຈຳປີຜ່ານມາ ແລະ ທິດທາງແຜນການ ປະຈຳປີຕໍ່ໜ້າ; ອີງຕາມທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງ ສພຊ ຊຸດທີ IX ສະບັບເລກທີ 04/ຄປຈ, ລົງວັນທີ 27 ເມສາ 2021.

ຕາງໜ້າ ຄປຈ.ສພຊ, ຂໍລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ກ່ຽວກັບການເຄື່ອນໄຫວປະຈຳປີ 2021 ແລະ ແຜນການປີ 2022 ຂອງ ສພຊ ໂດຍແບ່ງອອກເປັນ 3 ພາກຄື: ພາກທີ I: ສະຫລຸບຕີລາຄາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021; ພາກທີ II: ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ພາກທີ III: ມາດຕະການຈັດຕັ້ງປະຕິບັດ.



**ພາກທີ I: ສະຫລຸບຕີລາຄາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021**

**ກ. ດ້ານດີ ແລະ ຜົນສຳເລັດ**

ໃນຕະຫລອດໄລຍະເກືອບ 1 ປີຜ່ານມາ, ສພຊ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງຕົນ ທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເຊິ່ງໄດ້ຮັບຜົນສຳເລັດ ດັ່ງນີ້:

**1. ດ້ານນິຕິບັນຍັດ**

**1.1** ຄປຈ.ສພຊ ໄດ້ຊີ້ນຳກຳມາທິການກົດໝາຍ ສົມທົບກັບບັນດາກຳມາທິການສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ກະກຽມບັນດາຮ່າງກົດໝາຍ ທີ່ຕິດພັນກັບວາລະແຫ່ງຊາດ ເພື່ອນຳເຂົ້າພິຈາລະນາ ຮັບຮອງຢູ່ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ

ອ່ານຕໍ່ໜ້າ 2

## ຖະແຫລງຂ່າວຜົນການຄົ້ນຄວ້າ ພິຈາລະນາ ວຽກງານອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດຂອງ ຄປຈ.ສພຊ



(ສພຊ) ໃນຕອນເຊົ້າຂອງວັນທີ 8 ພະຈິກ 2021 ທີ່ຫ້ອງຖະແຫລງຂ່າວສະພາແຫ່ງຊາດ ນະຄອນຫລວງວຽງຈັນ, ທ່ານ ສົມມາດ ພົລເສນາ ຮອງປະທານຄະນະປະຈຳສະພາແຫ່ງຊາດ (ຄປຈ.ສພຊ) ໄດ້ຕາງໜ້າໃຫ້ ຄປຈ.ສພຊ ຖະແຫລງຂ່າວຕໍ່ສື່ມວນຊົນ ເພື່ອແຈ້ງໃຫ້ພະນັກງານ-ລັດຖະກອນ,ທະຫານ, ຕຳຫລວດ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າທົ່ວປະເທດ ແລະ ຊາວລາວທີ່ອາໄສຢູ່ຕ່າງປະເທດ ເພື່ອຮັບຊາບກ່ຽວກັບວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄລຍະວັນທີ 5-6 ພະຈິກ 2021 ທີ່ໄດ້ຄົ້ນຄວ້າພິຈາລະນາ ວຽກງານຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ວ່າ:

ກອງປະຊຸມ ໄດ້ຮັບຟັງ 2 ບົດລາຍງານ ຈາກປະທານຂອງ 2 ອົງການຄື: ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ແຜນການປະຈຳປີ 2022; ການກວດກາຕາມຜົນການກວດສອບ ປີ 2019 ທີ່ສະເໜີໂດຍທ່ານ ຄຳພັນ ພົມມະທັດ ປະທານອົງການກວດກາແຫ່ງລັດ ແລະ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນ

ອ່ານຕໍ່ໜ້າ 7

## ສູນກາງແນວລາວສ້າງຊາດປະກອບຄຳເຫັນຕໍ່ບົດລາຍງານການເຄື່ອນໄຫວວຽກງານ ສພຊ

(ສພຊ) ວັນທີ 8 ພະຈິກ 2021 ໃນວາລະພາກບ່າຍຂອງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ)ຊຸດທີ IX, ທ່ານ ນາງ ຄຳຈັນ ພົມແສງສະຫວັນ ຮອງປະທານສູນກາງແນວລາວສ້າງຊາດ ໄດ້ຕາງໜ້າສູນກາງແນວລາວສ້າງຊາດ, ຕາງໜ້າອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ປະກອບຄຳເຫັນຕໍ່ບົດລາຍງານການເຄື່ອນໄຫວວຽກງານ ສພຊ ວ່າ: ຕາງໜ້າໃຫ້ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຕະຫລອດຮອດປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ-ໄວ ໃນທົ່ວປະເທດ; ຂໍສະແດງຄວາມຊົມເຊີຍຕໍ່ທ່ານປະທານ, ບັນດາທ່ານຮອງປະທານ ສພຊ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ທຸກທ່ານທີ່ໄດ້ຮັບການເລືອກຕັ້ງເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ແລະ ຂໍຂໍ່ານັບຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ຢ່າງສຸດໃຈ.



ໂດຍປະຕິບັດຕາມພາລະບົດບາດ, ສິດ-ໜ້າທີ່ຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ໃນການຕິດຕາມ-ກວດກາ ການເຄື່ອນໄຫວຂອງ ສພຊ, ສະມາຊິກສະພາແຫ່ງຊາດ, ຕາມທີ່ລະບຸໄວ້ໃນມາດຕາ 7 ຂອງລັດຖະທຳມະນູນ ແຫ່ງ ສປປລາວ, ມາດຕາ 25, ມາດຕາ 90 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ມາດຕາ 8, ມາດຕາ 9 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປັບປຸງ ແລະ ກົດໝາຍຂອງບັນດາອົງການພາຄີ; ຂໍ້ກຳນົດວ່າດ້ວຍລະບຽບການຕິດຕາມ, ກວດກາ ຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຕໍ່ບັນດາອົງການອຳນາດລັດ ສະບັບເລກທີ 01/ຄລສພ, ລົງວັນທີ 30 ກັນຍາ 2020.

ໃນຖານະທີ່ເປັນຕົວແທນ ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນ ໜຶ່ງປີຜ່ານມາ ເຖິງແມ່ນວ່າຈະມີຄວາມຫຍຸ້ງຍາກ ອັນເນື່ອງມາຈາກສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຕໍ່ການເຄື່ອນໄຫວວຽກງານ ມີຂໍ້ຈຳກັດກໍຕາມ ແຕ່ດ້ວຍຄວາມຮັບຜິດຊອບຕໍ່ໜ້າ

ອ່ານຕໍ່ໜ້າ 3

## ສສຊ...

ວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022. ຈາກນັ້ນ, ປະທານກອງປະຊຸມ ໄດ້ສະຫລຸບສັງລວມການປະກອບຄຳເຫັນຂອງ ສສຊ ຕໍ່ວຽກງານຂອງ 2 ອົງການດັ່ງກ່າວ.

ຕອນບ່າຍຂອງວັນດຽວກັນ, ກອງປະຊຸມໄດ້ຮັບຟັງການສະເໜີມາດຕະຖານ ແລະ ລາຍຊື່ບຸກຄະລາກອນ ສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ຈາກຕາງໜ້າຄະນະປະຈຳສະພາແຫ່ງຊາດ ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ; ຈາກນັ້ນ ບັນດາທ່ານ ສສຊ ກໍໄດ້ປະກອບຄຳເຫັນໃສ່ບົດສະເໜີດັ່ງກ່າວ, ນອກນັ້ນ ກອງປະຊຸມໄດ້ຮັງຟັງການຜ່ານຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາ ຂອງສານປະຊາຊົນສູງສຸດ ຈາກຫົວໜ້າກອງເລຂານຸການກອງປະຊຸມ ທ່ານ ນາງ ປິ່ງຄຳ ລາຊະສິມມາ; ພາຍຫລັງປະທານກອງປະຊຸມ ສະຫລຸບສັງລວມການປະກອບຄຳເຫັນຂອງ ສສຊ ແລ້ວ, ກອງປະຊຸມໄດ້ຮັບຟັງບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022 ຈາກຕາງໜ້າຄະນະປະຈຳສະພາແຫ່ງຊາດ ທ່ານ ນາງ ສູນທອນ ໄຊຍະຈັກ; ຮັບຟັງບົດປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດ ຕໍ່ບົດລາຍງານການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ຈາກທ່ານ ນາງ ຄຳຈັນ ພົມແສງສະຫວັນ ຮອງປະທານສູນກາງແນວລາວສ້າງຊາດ. ຈາກນັ້ນ, ບັນດາທ່ານ ສສຊ ກໍໄດ້ສຸມໃສ່ຄົ້ນຄວ້າປະກອບຄຳເຫັນໃສ່ບົດລາຍງານດັ່ງກ່າວ ຕາມຄຳເຫັນເຈາະຈີ້ມ ແລະ ໃຫ້ທິດຊີ້ນຳຂອງປະທານກອງປະຊຸມ.

ຕອນເຊົ້າວັນທີ 9 ພະຈິກ 2021 ບັນດາທ່ານ ສສຊ ສືບຕໍ່ປະກອບຄຳເຫັນຕໍ່ວຽກງານຂອງ ສພຊ. ຈາກນັ້ນ, ທ່ານ ນາງ ສູນທອນ ໄຊຍະຈັກ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໃຫ້ຄວາມກະຈ່າງແຈ້ງຕໍ່ວຽກງານຂອງ ສພຊ. ຫລັງຈາກນັ້ນ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ຫົວໜ້າກອງເລຂານຸການກອງປະຊຸມ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022. ພາຍຫລັງ ສສຊ ປະກອບຄຳເຫັນໃສ່ເນື້ອໃນຮ່າງມະຕິແລ້ວ ປະທານກອງປະຊຸມ ໄດ້ສະຫລຸບສັງລວມການປະກອບຄຳເຫັນຂອງ ສສຊ.

ຕອນບ່າຍຂອງວັນດຽວກັນ, ທ່ານ ສຸບັນ ສະອະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໃຫ້ຄວາມກະຈ່າງແຈ້ງກ່ຽວກັບວຽກງານສະມາຊິກສະພາແຫ່ງຊາດ ຕໍ່ກັບບັນຫາທີ່ ສສຊ ຍົງໃຫ້ຄວາມສົນໃຈ, ທ່ານ ຈະເລີນ ເຍຍປາວເຮີ ຮອງປະທານຄະນະປະຈຳສະພາແຫ່ງຊາດ ໄດ້ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບວຽກງານສ້າງ ແລະ ປັບປຸງກົດໝາຍ ເພີ່ມຕື່ມຕໍ່ຄຳຊັກຖາມຂອງ ສສຊ, ທ່ານ ນາງ ສູນທອນ ໄຊຍະຈັກ ກໍໄດ້ໃຫ້ຄວາມກະຈ່າງແຈ້ງຢ່າງລະອຽດຖີ່ຖ້ວນຕໍ່ການເຄື່ອນໄຫວວຽກງານຂອງ ສພຊ. ເວລາຕໍ່ມາ ທ່ານ ນາງ ປິ່ງຄຳ ລາຊະສິມມາ ຫົວໜ້າກອງເລຂານຸການກອງປະຊຸມ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022. ພາຍຫລັງ ສສຊ ປະກອບຄຳເຫັນໃສ່ເນື້ອໃນຮ່າງມະຕິແລ້ວ ປະທານກອງປະຊຸມ ໄດ້ສະຫລຸບສັງລວມການປະກອບຄຳເຫັນຂອງ ສສຊ. ຈາກນັ້ນ ກອງປະຊຸມໄດ້ກ້າວສູ່ວາລະ ພິຈາລະນາ ແລະ ປະກອບຄຳເຫັນໃສ່ການສ້າງ ແລະ ປັບປຸງກົດໝາຍ. ເຊິ່ງກອງປະຊຸມໄດ້ຮັບຟັງການລາຍງານຮ່າງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ປັບປຸງ) ຈາກທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ, ພາຍຫລັງປະທານກອງປະຊຸມໃຫ້ຄຳເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນແລ້ວ ບັນດາທ່ານ ສສຊ ໄດ້ພ້ອມກັນປະກອບຄຳເຫັນຢ່າງກົງໄປກົງມາ ແລະ ມີເຫດມີຜົນ. ຈາກນັ້ນ, ອະນຸກຳມະການຮັບຜິດຊອບກົດໝາຍ ໄດ້ໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫາທີ່ ສສຊ ໃຫ້ຄວາມສົນໃຈ. ຫລັງຈາກນັ້ນ, ປະທານກອງປະຊຸມ ໄດ້ສະຫລຸບສັງລວມການປະກອບຄຳເຫັນຂອງ ສສຊ.

(ຂ່າວ: ນາງ ສຸມິນທາ ງາໄຊ; ພາບ: ອານຸສອນ ພູມມີທອນ)

## ຄປຈ.ສພຊ...

ສພຊ ຊຸດທີ IX ມີຈຳນວນ 2 ສະບັບຄື: ກົດໝາຍວ່າດ້ວຍຢາເສບຕິດ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສ່ວຍສາອາກອນ (ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍອາກອນຊົມໃຊ້) ເຊິ່ງປັດຈຸບັນ ພວມປັບປຸງໃຫ້ສົມບູນ ເພື່ອສະເໜີປະທານປະເທດເຊັນ ລັດຖະດຳລັດປະກາດໃຊ້ໃນຕໍ່ໜ້າ;

1.2 ຄປຈ.ສພຊ ໄດ້ຊີ້ນຳກຳມາທິການກົດໝາຍ ເປັນເຈົ້າການປະສານສົມທົບກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ບັນດາກຳມາທິການຂອງ ສພຊ ແລະ ພາກສ່ວນກ່ຽວຂ້ອງ ໃນການຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະ 5 ປີ ມາເປັນແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2021 ເພື່ອນຳເຂົ້າພິຈາລະນາຮັບຮອງຢູ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ມີຈຳນວນ 11 ສະບັບ, ໃນນີ້ ກົດໝາຍສ້າງໃໝ່ 4 ສະບັບ ແລະ ກົດໝາຍປັບປຸງ 7 ສະບັບ ໂດຍໄດ້ມີການທາບທາມຂອງອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຮັບປະກັນຄຸນນະພາບຂອງກົດໝາຍ ທີ່ໄດ້ນຳເຂົ້າຜ່ານກອງປະຊຸມໃນຄັ້ງນີ້;

1.3 ເອົາໃຈໃສ່ຊີ້ນຳການຄົ້ນຄວ້າ ໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ຕາມການສະເໜີຂອງລັດຖະບານ ເຊິ່ງໃນໄລຍະຜ່ານມາ ຄປຈ.ສພຊ ໄດ້ຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ອະນຸສັນຍາ 2 ສະບັບຄື: ສົນທິສັນຍາວ່າດ້ວຍການຮ່ວມມືເສດຖະກິດແບບຮອບດ້ານ ລະດັບພາກພື້ນ ແລະ ອະນຸສັນຍາ ກ່ຽວກັບຂໍ້ແນະນຳຂອງອົງການແຮງງານສາກົນ;

1.4 ເອົາໃຈໃສ່ຊີ້ນຳການຄົ້ນຄວ້າປະກອບຄຳເຫັນໃສ່ການປັບປຸງເນື້ອໃນບາງຈຸດຂອງລັດຖະບັນຍັດ ປະທານປະເທດ ເລກທີ 03/ປປທ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ສອດຄ່ອງກັບສະພາບຕົວຈິງ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ. ພ້ອມດຽວກັນນັ້ນ, ກໍໄດ້ຊີ້ນຳຊຸກຍູ້ການຄົ້ນຄວ້າ, ປັບປຸງບັນດານິຕິກຳການເຄື່ອນໄຫວຂອງສພຊແລະການເຄື່ອນໄຫວຂອງບັນດາກົງຈັກການຈັດຕັ້ງພາຍໃນ ສພຊ ຊຸດທີ IX ເພື່ອຮັບປະກັນ ແລະ ເປັນບ່ອນອີງໃນການປະຕິບັດໜ້າທີ່ການເມືອງຂອງຕົນໃນໄລຍະໃໝ່;

1.5 ຄປຈ.ສພຊ ມີການຄົ້ນຄວ້າ ພິຈາລະນາ ແລະ ອອກມະຕິຫລາຍສະບັບ ກ່ຽວກັບການຍົກເວັ້ນການປະຕິບັດບາງມາດຕາຂອງບັນດາກົດໝາຍທີ່ກ່ຽວຂ້ອງກັບໂຄງການການລົງທຶນພາຍໃນ ແລະ ຕ່າງປະເທດ ຕາມການສະເໜີຂອງລັດຖະບານ;

1.6 ເອົາໃຈໃສ່ນຳພາການກະກຽມດ້ານຕ່າງໆ ໃນການສະເຫລີມສະຫລອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 30 ປີ (1991-2021), ລາຍງານຂໍທິດຊີ້ນຳຈາກກົມການເມືອງ, ຄະນະເລຂາທິການສູນກາງພັກ. ການສະເຫລີມສະຫລອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 30 ປີ ໄດ້ດຳເນີນໄປຢ່າງຄຶກຄື້ນ, ສົມກຽດ ແລະ ໄດ້ຮັບຜົນສຳເລັດຢ່າງຈົບງາມ, ເປັນການໂຄສະນາເຜີຍແຜ່ມູນເຊື້ອໃນການນຳພາຂອງພັກ ໃນການສ້າງລັດປະຊາທິປະໄຕປະຊາຊົນ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ; ເປັນການປຸກລະດົມ, ຂົນຂວາຍໃຫ້ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າ ຮັບຮູ້, ເຂົ້າໃຈກ່ຽວກັບລັດຖະທຳມະນູນ, ກົດໝາຍ; ສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ນັບມື້ສູງຂຶ້ນ. ໃນໄລຍະດັ່ງກ່າວ ໄດ້ມີການຈັດຕັ້ງໂຄສະນາເຜີຍແຜ່ຜ່ານສື່ມວນຊົນປະເພດຕ່າງໆ ຢ່າງກວ້າງຂວາງ, ຈັດການສຳພາດການນຳຂອງສະພາແຫ່ງຊາດ ແລະ ບັນດາອະດີດການນຳ, ຈັດຕັ້ງການປາຖະກະຖາ, ວາງສະແດງຜົນງານຕະຫລອດໄລຍະ 30 ປີ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງພັກ-ລັດ ແລະ ພິເສດໄດ້ຈັດຕັ້ງພິທີໂຮມຊຸມນຸມສະເຫລີມສະຫລອງຢ່າງຄຶກຄື້ນຢູ່ນະຄອນຫລວງວຽງຈັນ ໂດຍມີການເຂົ້າຮ່ວມຂອງການນຳຂັ້ນສູງພັກ-ລັດ, ອະດີດການນຳພັກ-ລັດ ແລະ ຕາງໜ້າຊາວນະຄອນຫລວງວຽງຈັນ ແລະ ມີຜູ້ຊົມທີ່ຕິດຕາມຢູ່ທາງບ້ານເປັນຈຳນວນ 1,3 ລ້ານກວ່າຄົນ. ຄປຈ.ສພຊ ຍັງໄດ້ຖືກຮັບເຊີນໃຫ້ປາຖະກະຖາເລົ່າມູນເຊື້ອ ແລະ ທວນຄືນເຖິງເຫດການປະຫວັດສາດ ໃນການລິເລີ່ມສ້າງລັດຖະທຳມະນູນ ແລະ ກົດໝາຍຂອງ ສປປລາວ ພ້ອມທັງໂຄສະນາເຜີຍແຜ່ໄປພ້ອມໆກັນ ຢູ່ບັນດາກະຊວງ, ອົງການ ຈຳນວນ 10 ຄັ້ງ;

1.7 ເອົາໃຈໃສ່ຊີ້ນຳການຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ ເຊິ່ງໃນໄລຍະຜ່ານມາ ໄດ້ຄົ້ນຄວ້າການສະເໜີໃຫ້ຕີຄວາມໝາຍ ຈຳນວນ 3 ມາດຕາ ຂອງກົດໝາຍ 3 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍຄອບຄົວ;

1.7 ເອົາໃຈໃສ່ນຳພາ-ຊີ້ນຳການລົງໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ບັນດາເປົ້າໝາຍ ແລະ ເຂດເລືອກຕັ້ງຕ່າງໆ ໄດ້ຈຳນວນ 8 ແຂວງຄື: ຫລວງພະບາງ, ໄຊ

ອ່ານຕໍ່ສະບັບໜ້າ...

# ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນ ໃສ່ບົດລາຍງານຂອງລັດຖະບານ

ຕໍ່ຈາກສະບັບກ່ອນ...



2) ສືບຕໍ່ປະຕິບັດມາດຕະການຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ເຂັ້ມງວດ ແລະ ມີປະສິດທິຜົນສູງຂຶ້ນກວ່າເກົ່າ; ຄົ້ນຄວ້ານະໂຍບາຍ, ວິທີການ ແລະ ມາດຕະການໃຫ້ຈະແຈ້ງ ໃນການເປີດປະເທດ, ການສົ່ງເສີມການຜະລິດ ແລະ ການບໍລິການ ໂດຍສະເພາະແມ່ນການທ່ອງທ່ຽວ ແລະ ໂລຈິສຕິກ, ພິຈາລະນາຜ່ອນຜັນ ດ້ານອາກອນຕໍ່ທຸລະກິດການທ່ອງທ່ຽວ ໂດຍສະເພາະ SME;

3) ສືບຕໍ່ສ້າງ ແລະ ຈັດຕັ້ງປະຕິບັດແຜນແມ່ບົດແລວທາງເສດຖະກິດ ເໜືອ-ໃຕ້, ຕາເວັນອອກ-ຕາເວັນຕົກ ເພື່ອນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ ໃຫ້ມີປະສິດທິຜົນສູງສຸດ ໂດຍການນຳໃຊ້ທ່າແຮງບົ່ມຊ້ອນດ້ານຕ່າງໆທີ່ເຮົາມີ ໂດຍສະເພາະດ້ານກະສິກຳ, ອຸດສາຫະກຳ, ອຸດສາຫະກຳປຸງແຕ່ງ ແລະ ອື່ນໆ ເພື່ອສຸມທຶນຮອນເຂົ້າໃສ່ການພັດທະນາ ໃຫ້ບັນລຸຕາມແຜນທີ່ກຳນົດໄວ້;

4) ຄົ້ນຄວ້າພິຈາລະນາແຜນການລົງທຶນຂອງລັດ ໃຫ້ມີປະສິດທິຜົນຫລາຍຂຶ້ນກວ່າເກົ່າ, ໂດຍສະເພາະໃຫ້ສຸມໃສ່ໂຄງການທີ່ມີປະສິດທິຜົນ, ແກ້ໄຂໂຄງການທີ່ສຳເລັດແລ້ວ ແຕ່ຍັງຄ້າງຊຳລະ, ສຳລັບໂຄງການລົງທຶນໃໝ່ ແມ່ນຕ້ອງຮັບປະກັນແຫລ່ງທຶນທີ່ຈະມາຊຳລະ ຢ່າງຈະແຈ້ງ; ກວດກາ ແລະ ປະເມີນຄືນໂຄງການອະນຸຍາດລົງທຶນໃນຂົງເຂດພະລັງງານ ໂດຍສະເພາະ ໂຄງການເຂື່ອນໄຟຟ້າຂະໜາດນ້ອຍ ທີ່ທ້ອງຖິ່ນອະນຸຍາດ, ໂຄງການໃດບໍ່ຮັບປະກັນດ້ານເຕັກນິກ ຫລື ບໍ່ມີປະສິດທິຜົນທາງດ້ານເສດຖະກິດ ໃຫ້ພິຈາລະນາຍົກເລີກ;

5) ເອົາໃຈໃສ່ລະດົມແຫລ່ງທຶນພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາເສດຖະກິດ-ສັງຄົມ ໃນເງື່ອນໄຂໃໝ່; ເອົາໃຈໃສ່ຄົ້ນຄວ້າບັນຫາການຫັນຊັບສິນເປັນທຶນ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍທີ່ກຳນົດໄວ້, ການມອບໂອນຊັບສິນທີ່ມີລັກສະນະຍຸດທະສາດ ແລະ ມູນຄ່າສູງ ຕ້ອງຮັບປະກັນຄວາມໂປ່ງໃສ, ກວດສອບໄດ້ ແລະ ມີກົນໄກການຮັບຮອງຂອງສະພາແຫ່ງຊາດ;

6) ເອົາໃຈໃສ່ຕິດຕາມກວດກາ ການເພີ່ມຂຶ້ນຂອງລາຄາສິນຄ້າ, ໂດຍສະເພາະສິນຄ້າທີ່ຕິດພັນກັບການດຳລົງຊີວິດຂອງປະຊາຊົນ ເປັນຕົ້ນ ນ້ຳມັນເຊື້ອໄຟ, ໄຟຟ້າ, ສະບຽງອາຫານ, ການຂົນສົ່ງ ແລະ ອື່ນໆ;

7) ເອົາໃຈໃສ່ຂະຫຍາຍການຜະລິດກະສິກຳ-ປ່າໄມ້ ໄປສູ່ລະບົບທັນສະໄໝ ມີສະມັດຕະພາບສູງ, ກຸ້ມຄ່າ, ຊຸກຍູ້ການປຸງແຕ່ງຜົນຜະລິດກະສິກຳ ຕິດພັນກັບການຕະຫລາດແຕ່ຫົວທີ ກ້າວຂຶ້ນເປັນອຸດສາຫະກຳປຸງແຕ່ງກະສິກຳ ໃຫ້ເປັນຮູບປະທຳຫລາຍຂຶ້ນ ໃນແຕ່ລະທ້ອງຖິ່ນ ໂດຍມີການສົມທົບ ລະຫວ່າງອຳນາດການປົກຄອງ, ນັກທຸລະກິດ, ນັກວິທະຍາສາດ ແລະ ຜູ້ຜະລິດ ນຳໃຊ້ວັດຖຸດິບທີ່ມີຢູ່ພາຍໃນປະເທດໃຫ້ມີຄຸນຄ່າ, ມີຫລາກຫລາຍຜະລິດຕະພັນ ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ຮັບປະກັນການຜະລິດ ໃຫ້ໄດ້ມາດຕະຖານຕາມທິດກະສິກຳສະອາດ, ປອດໄພ, ຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ສາມາດຕອບສະໜອງຄວາມຕ້ອງການຂອງຕະຫລາດພາຍໃນ ແລະ ຕ່າງປະເທດ, ສ້າງມູນຄ່າເພີ່ມ, ສ້າງວຽກເຮັດງານທຳ, ສ້າງລາຍຮັບໃຫ້ຊາວກະສິກອນ ແລະ ມອບເປັນພັນທະເຂົ້າງົບປະມານແຫ່ງລັດ ໃຫ້ນັບມື້ນັບຫລາຍຂຶ້ນ;

8) ຄົ້ນຄວ້າ ຈັດສັນເຂດ ແລະ ນິຄົມອຸດສາຫະກຳຕາມແລວທາງເສດຖະກິດ ເພື່ອຮອງຮັບ ແລະ ດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ເອົາໃຈໃສ່ປັບປຸງເຂດນິຄົມອຸດສາຫະກຳທີ່ມີແລ້ວດ້ວຍການສ້າງສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮັບປະກັນໃຫ້ໂຮງງານສາມາດດຳເນີນກິດຈະການໄດ້ຢ່າງປົກກະຕິ, ຄຸ້ມຄອງແຮງງານ ແລະ ປະຕິບັດນະໂຍບາຍຢ່າງເໝາະສົມ ເພື່ອຫລຸດຜ່ອນຄວາມສ່ຽງບໍ່ໃຫ້ໂຮງງານຖືກປິດ ໃນໄລຍະທີ່ມີການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19;

9) ເອົາໃຈໃສ່ ສ້າງ ແລະ ປັບປຸງກົດໝາຍ, ຜັນຂະຫຍາຍນິຕິກຳໃຕ້ກົດໝາຍ ໃນຂົງເຂດພະລັງງານ ແລະ ບໍ່ແຮ່ ໂດຍສະເພາະ ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ, ກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍບໍ່ແຮ່ ໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງການພັດທະນາ; ໄປຄຽງຄູ່ກັນນັ້ນ ຕ້ອງປະຕິບັດກົດໝາຍໃນຂົງເຂດນີ້ຢ່າງເຂັ້ມງວດ;

10) ເອົາໃຈໃສ່ຄຸ້ມຄອງບັນດາໂຄງການ ທີ່ລັດຖະບານອະນຸຍາດໃຫ້ເຮັດທົດລອງຂຸດຄົ້ນແຮ່ທາດ ເປັນຕົ້ນ: ການທົດລອງຂຸດຄົ້ນແຮ່ເຫລັກ ແລະ ຄຳເຄົ້າ ເພື່ອສົ່ງອອກ ໃຫ້ປະຕິບັດຕາມສັນຍາທີ່ໄດ້ເຊັນກັບລັດຖະບານ ແລະ ມີມາດຕະການຕາມກົດໝາຍ ຕໍ່ຜູ້ໄດ້ຮັບອະນຸຍາດດຳເນີນໂຄງການດັ່ງກ່າວຢ່າງເຂັ້ມງວດ;

11) ເອົາໃຈໃສ່ຄຸ້ມຄອງການໃຫ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດ, ຕິດຕາມກວດກາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ຂອງບັນດາໂຄງການລົງທຶນ ຢ່າງລະອຽດ, ມີມາດຕະການຢ່າງເຂັ້ມງວດ ຕໍ່ບັນດາໂຄງການ ທີ່ສົ່ງຜົນກະທົບທາງລົບຢ່າງຮ້າຍແຮງ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ຄົ້ນຄວ້າອອກນິຕິກຳ ທີ່ລະອຽດ ແລະ ຈະແຈ້ງ ກ່ຽວກັບການຄຸ້ມຄອງນຳໃຊ້ ແລະ ການຫັນປ່ຽນທີ່ດິນກະສິກຳ ໂດຍສະເພາະການຫັນປ່ຽນດິນນາ ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ໃນຕໍ່ໜ້າ;

12) ເອົາໃຈໃສ່ວຽກງານພັດທະນາຊົນນະບົດ ດ້ວຍການສຸມໃສ່ສ້າງ ແລະ ປັບປຸງສະຫະກອນກະສິກຳ ແລະ ບໍລິການ ໃຫ້ເປັນຕົວແບບປະມານ 3 ສະຫະກອນຜະລິດກະສິກຳ, ສ້າງໃຫ້ເຂັ້ມແຂງ 2 ສະຫະກອນ ແລະ ກຸ່ມການຜະລິດ 663 ກຸ່ມ

ອ່ານຕໍ່ສະບັບໜ້າ...

# ບົດລາຍງານໂດຍສັງເຂບຂອງທ່ານ ນາຍົກລັດຖະມົນຕີ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2

ຕໍ່ຈາກສະບັບກ່ອນ...



ໄປຄຽງຄູ່ກັບການຮັກສາສຸຂະພາບ ແລະ ປົກປ້ອງຊີວິດຂອງປະຊາຊົນ ໂດຍສຸມໃສ່ຊອກຫາ ແລະ ສັກວັກຊິນໃຫ້ປະຊາຊົນລາວ ເພື່ອໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້ ຫລາຍກວ່າ 50% ຂອງພົນລະເມືອງ, ຕ້ອງໄດ້ສ້າງທຸກເງື່ອນໄຂໃຫ້ປະຊາຊົນໄດ້ທຳມາຫາກິນ ຕາມວິທີປົກກະຕິແບບໃໝ່ ດ້ວຍການຮຽນຮູ້ບົດຮຽນຂອງປະເທດເພື່ອນມິດໃນໂລກ ກ່ຽວກັບການດຳລົງຊີວິດ ໃນເງື່ອນໄຂພະຍາດໂຄວິດ-19; ຖືເອົາການແກ້ໄຂເສດຖະກິດ ເປັນບັນຫາໃຈກາງ ແລະ ການແກ້ບັນຫາໂຄວິດ ເປັນບັນຫາສຳຄັນ ເຊິ່ງມາດຕະການທີ່ເຮົາຈະປະຕິບັດໃນຕໍ່ໜ້ານີ້ ແມ່ນສອດຄ່ອງກັບມາດຕະການທີ່ສາກົນໄດ້ວາງອອກ ເປັນຕົ້ນແມ່ນໃນຂອບຂອງອາຊຽນ ເຊິ່ງໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 38, 39, ກອງປະຊຸມອາຊຽນບວກ 3 ແລະ ກອງປະຊຸມອາຊີຕາເວັນອອກ ລະຫວ່າງວັນທີ 26-28 ຕຸລາຜ່ານມາ ແມ່ນມີການຕົກລົງຮ່ວມກັນຫລາຍບັນຫາ ເຊັ່ນ: ການສະໜອງວັກຊິນໃຫ້ທົ່ວເຖິງ, ການຟື້ນຟູເສດຖະກິດພາຍຫລັງໂຄວິດ ໂດຍເນັ້ນໃສ່ເປີດການໄປມາຫາສູ່, ການລົງທຶນ ແລະ ຄ້າຂາຍນຳກັນ ແບບປົກກະຕິໃນສະພາບວິຖີຊີວິດໃໝ່ ເພື່ອແນໃສ່ໃຫ້ສາມາດເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ຟື້ນຟູເສດຖະກິດແຫ່ງຊາດ.

ສຳລັບປະເທດເຮົາ ຄວນເອົາໃຈໃສ່ສຶກສາອົບຮົມປະຊາຊົນ ໃຫ້ເຂົ້າໃຈ ແລະ ຫັນປ່ຽນຈິນຕະນາການ ທີ່ມີຄວາມມຸ້ງຫວັງຢາກເຮັດໃຫ້ທົ່ວປະເທດປອດພະຍາດໂຄວິດ-19. ພຶດຕິກຳຕົວຈິງ ໃນສອງປີກວ່າທີ່ຜ່ານມາ ແມ່ນຍັງບໍ່ທັນມີປະເທດໃດໃນໂລກນີ້ ສາມາດເຮັດໄດ້, ຍ້ອນແນວນັ້ນ, ຈຶ່ງໄດ້ພ້ອມກັນຫັນປ່ຽນແນວຄິດເກົ່າ ໄປສູ່ແນວຄິດໃໝ່ ນັ້ນແມ່ນຕ້ອງຮຽນຮູ້ພະຍາດນີ້ ແລະ ຢູ່ກັບພະຍາດນີ້ໃຫ້ໄດ້ ໂດຍມີຄວາມປອດໄພ ນັ້ນເອີ້ນວ່າ ວິຖີຊີວິດປົກກະຕິແບບໃໝ່ (ໃນນັ້ນຕ້ອງເພີ່ມທະວີຄົ້ນຄວ້າຫາຢາວັກຊິນ, ອຸປະກອນການແພດ ແລະ ຢາປົວໃຫ້ມີຄຸນນະພາບ ແລະ ໃຫ້ປະຊາຊົນເຂົ້າເຖິງໄດ້ຢ່າງສະເໝີພາບ, ທົ່ວເຖິງ, ຮູ້ວິທີປ້ອງກັນປິ່ນປົວດ້ວຍຕົນເອງ ກ້າວເຖິງການຖືວ່າພະຍາດນີ້ເປັນພະຍາດທ້ອງຖິ່ນ, ເຂດແຄ້ວນ). ປະຊາຊົນທັງໂລກ ບໍ່ອາດສາມາດປິດປະຕູຂັງຕົນເອງ ໂດຍທີ່ບໍ່ທຳມາຫາກິນ, ທຳການຜະລິດ ເພື່ອພັດທະນາເສດຖະກິດ ແລະ ຍົກລະດັບຊີວິດການເປັນຢູ່ຂອງຕົນເອງໄດ້.

ທັງໝົດທີ່ກ່າວມາຂ້າງເທິງນັ້ນ ແມ່ນເນື້ອໃນການລາຍງານໂດຍສັງເຂບ ກ່ຽວກັບພາບລວມຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ບາງວຽກງານຕົ້ນຕໍຂອງແຜນການ ປີ 2022 ທີ່ລັດຖະບານຈະສຸມໃສ່ແກ້ໄຂ. ລັດຖະບານ ຂໍໃຫ້ຄຳໝັ້ນສັນຍາຕໍ່ສະພາແຫ່ງຊາດວ່າ ຈະສືບຕໍ່ປະຕິບັດໜ້າທີ່ຢ່າງສຸດຄວາມສາມາດຂອງຕົນ ແລະ ເອົາໃຈໃສ່ຢ່າງຕັ້ງໜ້າແກ້ໄຂບັນຫາລວມຂອງຊາດ ໃຫ້ປະສົບຜົນສຳເລັດຕາມແຜນການທີ່ກຳນົດໄວ້.

ອີກເທື່ອໜຶ່ງ ຂໍຮຽນສະເໜີມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ຄົ້ນຄວ້າປະກອບຄວາມເຫັນຢ່າງກົງໄປກົງມາ, ສ້າງສັນ ແລະ ຊອກທາງອອກທີ່ດີຮ່ວມກັນ ພ້ອມທັງຂໍການສະໜັບສະໜູນ ແລະ ໃຫ້ກຳລັງໃຈແກ່ລັດຖະບານໃນການປະຕິບັດໜ້າທີ່ຂອງຕົນໃນປີ 2022 ນີ້ ໃຫ້ເປັນປີແຫ່ງການບຸກເບີກ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ປາກົດຜົນເປັນຈິງ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອນຳພາປະເທດຊາດຂອງພວກເຮົາ ໃຫ້ຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນ.

ສູນກາງ...

ທີ່ ທີ່ໄດ້ຮັບການມອບໝາຍ ອົງການແນວລາວສ້າງຊາດ-ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ກໍໄດ້ຍົກສູງຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ການເມືອງ, ໂດຍຜ່ານການສ່ອງແສງລາຍງານຕາມສາຍຕັ້ງຂອງຕົນ, ການຕິດຕາມ, ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງປະຊາຊົນຢູ່ທ້ອງຖິ່ນຕ່າງໆ ຕໍ່ການປະຕິບັດບົດບາດໜ້າທີ່ຂອງ ສພຊ, ສະມາຊິກສະພາແຫ່ງຊາດ ແລະ ການປະຕິບັດບົດບາດໜ້າທີ່ຂອງອົງການບໍລິຫານ, ອົງການຕຸລາການ, ອົງການໄອຍະການປະຊາຊົນ ທີ່ມີບົດບາດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ການແກ້ໄຂຄຳສະເໜີຂອງປະຊາຊົນ; ຜ່ານການຕິດຕາມ-ກວດກາສັງລວມໄດ້ດັ່ງນີ້:

**I. ການປະຕິບັດບົດບາດ, ໜ້າທີ່ຂອງ ສພຊ ແລະ ການປະຕິບັດສິດ, ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ**

ກ່ອນອື່ນ ຂໍສະແດງຄວາມເຫັນດີເປັນເອກະພາບ ຕໍ່ເນື້ອໃນບົດສະຫລຸບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດປະຈຳປີ 2021 ແລະ ທິດທາງວຽກງານ, ບັນດາຄາດໝາຍສູ້ຊົນດ້ານຕ່າງໆ ໃນປີ 2022. ທີ່ສະເໜີໂດຍທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ, ຮອງປະທານ ສພຊ ເຊິ່ງໄດ້ຍົກໃຫ້ເຫັນການເຄື່ອນໄຫວຂອງ ສພຊ ຕະຫລອດໄລຍະເກືອບໜຶ່ງປີຜ່ານມາ ທີ່ມີທັງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ບັນຫາອື່ນໆ; ພາຍໃຕ້ການຊີ້ນຳນຳພາຂອງພັກ, ຄວາມເປັນເຈົ້າການຂອງຄະນະປະຈຳສະພາແຫ່ງຊາດ, ຄວາມຮັບຜິດຊອບຂອງສະມາຊິກສະພາແຫ່ງຊາດທຸກທ່ານ ໂດຍລວມແລ້ວເຫັນວ່າ:

1). ສພຊ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດ, ໜ້າທີ່ຂອງຕົນ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ, ປະຕິບັດບົດບາດເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ, ໃນການຄົ້ນຄວ້າພິຈາລະນາຮັບຮອງເອົາບັນຫາສຳຄັນຕ່າງໆເຊັ່ນ: ໃນກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ເຊິ່ງໄດ້ພິຈາລະນາເອົາຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ IX, ພິຈາລະນາຮັບຮອງເອົາກົງຈັກ, ບຸກຄະລາກອນຂອງອົງການລັດ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ສພຊ ໄດ້ເອົາໃຈໃສ່ຕໍ່ການຄົ້ນຄວ້າໃຫ້ສັດຕະຍາບັນ ແກ່ສົນທິສັນຍາ-ອະນຸສັນຍາ 2 ສະບັບຄື: ສົນທິສັນຍາວ່າດ້ວຍການຮ່ວມມືເສດຖະກິດ ແບບຮອບດ້ານ ລະດັບພາກພື້ນ ແລະ ອະນຸສັນຍາກ່ຽວກັບຂໍ້ແນະນຳຂອງອົງການແຮງງານສາກົນ (ILO).

2). ໃນກອງປະຊຸມສະໄໝວິສາມັນຂອງ ສພຊ ໃນຖານະເປັນອົງການນິຕິບັນຍັດ ສພຊ ໄດ້ພິຈາລະນາຮັບຮອງເອົາການປັບປຸງກົດໝາຍຈຳນວນ 5 ສະບັບ ທີ່ພົວພັນເຖິງຂົງເຂດການເງິນ ແລະ ກົດໝາຍວ່າດ້ວຍຢາເສບຕິດ ທັງໄດ້ເອົາໃຈໃສ່ຕໍ່ການຕີຄວາມໝາຍ, ອະທິບາຍກົດໝາຍ ກວມເອົາກົດໝາຍ 3 ສະບັບ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈ ຕໍ່ສັງຄົມຈະແຈ້ງຂຶ້ນຕື່ມ; ໄດ້ປັບປຸງນິຕິກຳການເຄື່ອນໄຫວຂອງພາກສ່ວນຕ່າງໆ ພາຍໃນ ສພຊ ກອງປະຊຸມຄັ້ງນີ້ ໄດ້ພິຈາລະນາຮັບຮອງເອົາມະຕິກອງປະຊຸມສະໄໝວິສາມັນ ຂອງ ສພຊ 2 ສະບັບຄື: ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ການພິຈາລະນາຮັບຮອງເອົາ 2 ວາລະແຫ່ງຊາດ ມີຄວາມສຳຄັນເປັນການສະແດງເຖິງຄວາມຕັດສິນໃຈຂອງພັກ-ລັດ ໃນການຜັນຂະຫຍາຍມະຕິຄັ້ງທີ XI ຂອງພັກ ເພື່ອແກ້ໄຂບັນຫາສຳຄັນ, ຈຳເປັນ ແລະ ຮີບດ່ວນຂອງຊາດ ແລະ ເຮັດໃຫ້ການແກ້ໄຂບັນຫາດັ່ງກ່າວນີ້ເປັນພັນທະ, ເປັນຄວາມຮັບຜິດຊອບຂອງທຸກພາກສ່ວນໃນສັງຄົມ. ເຊິ່ງທັງໝົດນີ້ແມ່ນຜົນສຳເລັດຂອງບັນດາທ່ານຄະນະປະຈຳ, ສະມາຊິກສະພາແຫ່ງຊາດ ຊຸດທີ IX ທີ່ໄດ້ປະຕິບັດບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ.

ອ່ານຕໍ່ສະບັບໜ້າ...

# ຜູ້ວ່າການທະນາຄານ ແຫ່ງ ສປປລາວ ລາຍງານກ່ຽວກັບແຜນເງິນຕາ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2

ຕໍ່ຈາກສະບັບກ່ອນ...



ຕາມເປົ້າໝາຍແທ້; ເງື່ອນໄຂຄວາມພ້ອມໃນການເຂົ້າເຖິງແຫລ່ງທຶນຈາກລະບົບທະນາຄານຂອງ SMEs ຍັງຈຳກັດ;

3) ຍັງມີການເຄື່ອນໄຫວທຸລະກິດດ້ານການເງິນຂອງບຸກຄົນ, ນິຕິບຸກຄົນ ແບບບໍ່ສອດຄ່ອງກັບລະບຽບກົດໝາຍຈຳນວນບໍ່ໜ້ອຍ ເປັນຕົ້ນຕິດພັນກັບການແລກປ່ຽນເງິນຕາ, ການເຄື່ອນຍ້າຍເງິນລະຫວ່າງປະເທດ ທີ່ຍັງບໍ່ທັນສາມາດຄຸ້ມຄອງໄດ້ຢ່າງເຄັ່ງຄັດ ແລະ ທົ່ວເຖິງ ຕາມລະບຽບກົດໝາຍ.

**II. ແຜນວຽກຈຸດສຸມຮອດທ້າຍປີ 2021**

ໃນໄລຍະທ້າຍປີ 2021, ຄາດວ່າປະເທດເຮົາຈະຍັງສືບຕໍ່ປະເຊີນກັບສິ່ງທ້າທາຍຫລາຍດ້ານຈາກປັດໄຈການແຂງຄ່າຂອງເງິນຕາຕ່າງປະເທດສະກຸນຫລັກ ຕາມທ່າອ່ຽງການຟື້ນຕົວເສດຖະກິດທີ່ດີຂຶ້ນ, ການເພີ່ມຂຶ້ນລະດັບລາຄານ້ຳມັນດິບ, ອັດຕາເງິນເຟີ້, ອັດຕາດອກເບ້ຍ ຢູ່ສາກົນ; ໃນຂະນະທີ່ເສດຖະກິດພາຍໃນເຮົາມີຫລາຍແຮງກົດດັນ ແລະ ຍັງຕ້ອງການເວລາໃນການຟື້ນຕົວ. ສະນັ້ນ, ເພື່ອໃຫ້ບັນລຸຕາມແຜນການໃນທ້າຍປີ 2021, ພາຍໃຕ້ການຊີ້ນຳຂອງລັດຖະບານ, ຂະແໜງທະນາຄານຈະສຸມໃສ່ບັນດາໜ້າວຽກຕົ້ນຕໍດັ່ງນີ້:

- ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍເງິນຕາ ຕາມທິດຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ ດ້ວຍການສືບຕໍ່ຊຸກຍູ້ການສະໜອງແຫລ່ງທຶນເພື່ອຊຸກຍູ້ການຜະລິດ ແລະ ສົ່ງເສີມການສົ່ງອອກ ຕາມແຜນທີ່ກຳນົດໄວ້; ສະໜອງແຫລ່ງທຶນໃຫ້ແກ່ທະນາຄານນະໂຍບາຍ; ປະກອບແຫລ່ງທຶນໃຫ້ແກ່ກອງທຶນພັດທະນາໄຊສົມບູນ ຜ່ານກະຊວງການເງິນ;
- ສືບຕໍ່ກຳນົດອັດຕາແລກປ່ຽນຕາມກົນໄກໃໝ່ທີ່ໄດ້ປັບປຸງ ໄປຄຽງຄູ່ກັບການປັບປຸງລະບົບການຕິດຕາມສະພາບອັດຕາແລກປ່ຽນ ແລະ ການຊື້-ຂາຍເງິນຕາຕ່າງປະເທດຂອງທົ່ວລະບົບ ໃຫ້ມີຄວາມຊັດເຈນ ແລະ ຄົບຖ້ວນ ຫລາຍຂຶ້ນ ເພື່ອເຮັດໃຫ້ສ່ວນຕ່າງລະຫວ່າງອັດຕາແລກປ່ຽນເງິນກີບທຽບເງິນໂດລາຂອງອັດຕາທາງການ ແລະ ຂອງອັດຕາຕະຫລາດນອກລະບົບ ແຄບເຂົ້າກວ່າລະດັບປັດຈຸບັນ (ວັນທີ 31 ຕຸລາ 2021, ຢູ່ໃນລະດັບ 13,36% ສຳລັບອັດຕາແລກປ່ຽນເງິນກີບທຽບເງິນໂດລາ ແລະ ຕ່ຳກວ່າ 1% ສຳລັບອັດຕາແລກປ່ຽນເງິນກີບທຽບເງິນບາດ);
- ສືບຕໍ່ຮ່ວມເຮັດວຽກກັບຂະແໜງການກ່ຽວຂ້ອງ ປະຕິບັດມາດຕະການຕໍ່ບຸກຄົນ, ນິຕິບຸກຄົນທີ່ເຄື່ອນໄຫວແລກປ່ຽນເງິນຕາ ແລະ ເຄື່ອນໄຫວທຸລະກິດດ້ານການເງິນຮູບແບບອື່ນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
- ຕິດຕາມກວດກາຄືນການຈັດຕັ້ງປະຕິບັດລະບອບການຄຸ້ມຄອງລະຫວ່າງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາທີ່ເປັນຕົວແທນ ໃຫ້ເປັນໄປຕາມລະບຽບການທີ່ໄດ້ວາງອອກ;
- ສືບຕໍ່ທົບທວນ ແລະ ປັບປຸງບັນດານິຕິກຳກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເປັນຕົ້ນ ການຄຸ້ມຄອງການເຄື່ອນໄຫວແລກປ່ຽນເງິນຕາ, ການເປີດບັນຊີ ແລະ ການນຳໃຊ້ບັນຊີເງິນຕາຕ່າງປະເທດ, ການຄຸ້ມຄອງລາຍຮັບເປັນຕາຕ່າງປະເທດ;
- ສືບຕໍ່ຈັດຕັ້ງປະຕິບັດກົນໄກການຄຸ້ມຄອງລາຍຮັບຈາກການສົ່ງອອກສິນຄ້າໃນໂຄງການທົດລອງຂຸດຄົ້ນ ແລະ ສົ່ງອອກ ແຮ່ທາດ ຜ່ານບັນຊີຄຸ້ມຄອງສະເພາະ ເພື່ອໃຫ້ເງິນຕາຕ່າງປະເທດລວມສູນຢູ່ລະບົບທະນາຄານຫລາຍຂຶ້ນ;
- ກະກຽມຄວາມພ້ອມດ້ານນິຕິກຳ ແລະ ພື້ນຖານໂຄງລ່າງດ້ານການຊຳລະ ເພື່ອຮອງຮັບການສະໜອງການບໍລິການດ້ານການເງິນ ຢູ່ຂົງເຂດສະຖານີລົດໄຟ ແລະ ຫົວໜ່ວຍບໍລິການ ຕິດພັນກັບໂຄງການທາງລົດໄຟລາວ-ຈີນ, ຢູ່ເຂດເສດຖະກິດພິເສດ;
- ສືບຕໍ່ກະກຽມຄວາມພ້ອມສຳລັບການປັບປຸງທະນາຄານນະໂຍບາຍ ໄປເປັນທະນາຄານພັດທະນາຊົນນະບົດ.

**III. ທິດທາງແຜນການປີ 2022**

ໃນປີ 2022, ທ່າອ່ຽງເສດຖະກິດສາກົນ ແລະ ພາຍໃນຄາດວ່າຈະດີຂຶ້ນ ຈາກສະພາບການສັກວັກແຊັງທີ່ທົ່ວເຖິງຫລາຍຂຶ້ນ, ການເຊື່ອມໂຍງເສດຖະກິດທີ່ສະດວກ-ກວ້າງຂວາງຂຶ້ນ ພາຍຫລັງການເປີດທາງລົດໄຟລາວ-ຈີນ ແຕ່ເຖິງຢ່າງໃດກໍຕາມ, ເສດຖະກິດຂອງພວກເຮົາກໍຄາດວ່າຈະສືບຕໍ່ປະເຊີນສິ່ງທ້າທາຍຫລາຍດ້ານ ເປັນຕົ້ນແຮງກົດດັນດ້ານລາຄາ, ອັດຕາດອກເບ້ຍ ທີ່ມີສູງຂຶ້ນ ແລະ ຍັງຕ້ອງການແຫລ່ງທຶນ ພ້ອມທັງເວລາ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພື້ນຖານເສດຖະກິດພາຍໃນ.

1. ຄາດໝາຍດ້ານເງິນຕາ ປະຈຳປີ 2022

ຈາກສະພາບເງື່ອນໄຂທີ່ກ່າວມານັ້ນ, ລັດຖະບານຈຶ່ງໄດ້ເຫັນດີກຳນົດບັນດາຄາດໝາຍດ້ານເງິນຕາ. ຂໍລາຍງານເພີ່ມຕື່ມຕິດພັນກັບບາງຄາດໝາຍຄື: ຄາດໝາຍດ້ານການຂະຫຍາຍຕົວຂອງປະລິມານເງິນ M2 ທີ່ຈະໃຫ້ຂະຫຍາຍຕົວໃນລະດັບບໍ່ເກີນ 22% ທຽບໃສ່ປີຜ່ານມາ ເຊິ່ງຖືວ່າສູງກວ່າຄາດໝາຍທີ່ໄດ້ກຳນົດໃນປີ 2021 ແລະ 2-3 ປີຜ່ານມາ ທີ່ເຄີຍໃຫ້ຂະຫຍາຍຕົວຢູ່ໃນລະດັບບໍ່ເກີນ 20% ທຽບໃສ່ປີຜ່ານມາໃນຂະນະທີ່ໄດ້ກຳນົດຄາດໝາຍອັດຕາເງິນເຟີ້ໃຫ້ຢູ່ໃນລະດັບບໍ່ເກີນ 5-7% ເຊິ່ງການກຳນົດທັງສອງຄາດໝາຍແມ່ນສອດຄ່ອງກັບແນວທາງນະໂຍບາຍຂອງລັດຖະບານທີ່ຕ້ອງການສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ ແລະ ຮັກສາສະຖຽນລະພາບດ້ານລາຄາ ດ້ານເງິນຕາ ໄປຄວບຄູ່ກັນ. ໃນການກຳນົດທັງສອງຄາດໝາຍນັ້ນ ແມ່ນໄດ້ຄົ້ນຄວ້າພິຈາລະນາຈາກປະເມີນສະພາບການປະຕິບັດຕົວ

ອ່ານຕໍ່ສະບັບໜ້າ...

## ສພຂ ຊຽງຂວາງ ທາບທາມຮ່າງກົດໝາຍ 11 ສະບັບ



(ສພຊ) ໃນວັນທີ 21 ຕຸລາ 2021 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ເປີດກອງປະຊຸມທາບທາມຮ່າງກົດໝາຍຈຳນວນ 11 ສະບັບ ໂດຍການເປັນປະທານຂອງທ່ານ ບຸນໂຮມ ເທດທານີ ປະທານ ສພຂ ຊຽງຂວາງ, ມີຮອງປະທານ ສພຂ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9, ສະມາຊິກສະພາປະຊາຊົນແຂວງປະຈຳເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ກົມກອງ, ອົງການທຽບເທົ່າພະແນກການຂອງແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ ສພຂ ເຂົ້າຮ່ວມ.

ທັງນີ້, ກໍເພື່ອຮັບປະກັນໃຫ້ຮ່າງກົດໝາຍຈຳນວນ 11 ສະບັບທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂອງການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

ກົດໝາຍທີ່ນຳມາທາບທາມຄັ້ງນີ້, ຜູ້ແທນກອງປະຊຸມໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າປະກອບຄຳເຫັນແລກປ່ຽນເຊິ່ງກັນແລະກັນ ຢ່າງມີລັກສະນະສ້າງສັນ ໃສ່ຮ່າງກົດໝາຍຈຳນວນ 11 ສະບັບ ເພື່ອເຮັດໃຫ້ຮ່າງກົດໝາຍມີຄວາມຄົບຖ້ວນ ແລະ ສົມບູນຂຶ້ນ ເພື່ອໃຫ້ສອດຄ່ອງກັບການປະຕິບັດວຽກງານຕົວຈິງ ເຊິ່ງຮ່າງກົດໝາຍຈຳນວນ 11 ສະບັບມີ: ຮ່າງກົດໝາຍວ່າດ້ວຍຍານພາຫະນະທາງບົກ, ບາງມາດຕາຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ), ບາງມາດຕາຂອງກົດໝາຍວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ), ບາງມາດຕາຂອງຮ່າງກົດໝາຍວ່າດ້ວຍສຳຫລວດວັດແທກ ແລະ ສ້າງແຜນທີ່ (ສ້າງໃໝ່), ບາງມາດຕາຂອງຮ່າງກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ (ສ້າງໃໝ່), ບາງມາດຕາຂອງຮ່າງກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ (ສ້າງໃໝ່), ບາງມາດຕາຂອງຮ່າງກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ), ບາງມາດຕາຂອງຮ່າງກົດໝາຍວ່າດ້ວຍໂທລະຄົມມະນາຄົມ (ສະບັບປັບປຸງ), ບາງມາດຂອງຮ່າງກົດໝາຍວ່າດ້ວຍມໍຣະດົກແຫ່ງຊາດ (ສະບັບປັບປຸງ), ບາງມາດຕາຂອງຮ່າງກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ), ບາງມາດຕາຂອງຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ).

ໃນຕອນທ້າຍ, ທ່ານ ບຸນໂຮມ ເທດທານີ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ກັບບັນດາຜູ້ແທນກອງປະຊຸມທີ່ໄດ້ສຸມສະຕິປັນຍາ ປະກອບຄຳຄິດ, ຄຳເຫັນໃສ່ຮ່າງກົດໝາຍດ້ວຍຄວາມຮັບຜິດຊອບສູງ ແລະ ຈະນຳເອົາຄຳຄິດຄຳເຫັນດັ່ງກ່າວ ນຳເຂົ້າຜ່ານໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX.

(ນາງ ສຸກສະຫວັນ ອິນທະແສງ)

## ສພຂ ອຸດົມໄຊ ເຜີຍແຜ່ຄຳສັ່ງຂອງເຈົ້າແຂວງ



(ສພຊ) ຕອນເຊົ້າວັນຈັນທີ 1 ພະຈິກ 2021 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ມີກອງປະຊຸມເຜີຍແຜ່ຄຳສັ່ງຂອງເຈົ້າແຂວງ ແຂວງອຸດົມໄຊ ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານ ສພຂ ອຸດົມໄຊ; ມີຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດນີ້, ທ່ານ ຄຳພອງ ເດດກົງພົນ ຮອງເລຂາທິການ ສພຂ ອຸດົມໄຊ ໄດ້ຂຶ້ນເຜີຍແຜ່ຄຳສັ່ງຂອງ ເຈົ້າແຂວງແຂວງອຸດົມໄຊ ສະບັບເລກທີ 1031/ຈຂ.ອຊ, ລົງວັນທີ 31 ຕຸລາ 2021 ກ່ຽວກັບການຍົກລະດັບການປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຢູ່ພາຍໃນແຂວງອຸດົມໄຊ ແຕ່ໄລຍະວັນທີ 1-14 ພະຈິກ 2021 ທັງນີ້, ແມ່ນເພື່ອປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ເພື່ອເຮັດໃຫ້ການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ມີຜົນສຳເລັດ ທັງຮັບປະກັນບໍ່ໃຫ້ແຜ່ຂະຫຍາຍເປັນວົງກວ້າງ ແລະ ເຖິງຂັ້ນທີ່ຮ້າຍແຮງ.

ພ້ອມນັ້ນ, ປະທານກອງປະຊຸມໄດ້ມີທິດຊີ້ນຳໃຫ້ຂະແໜງກ່ຽວຂ້ອງ ຈັດຕາຕະລາງປະຈຳການພາຍໃນໃຫ້ເປັນປົກກະຕິເພື່ອແກ້ໄຂວຽກງານອັນຈຳເປັນ-ຮີບດ່ວນ ແລະ ເນັ້ນໜັກໃຫ້ພະນັກງານ-ລັດຖະກອນພາຍໃນ ສພຂ ອຸດົມໄຊ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວໃຫ້ເຂັ້ມງວດ.

(ແສງພອນ ອິນນະລົງ)

## ສພຂ ໄຊຍະບູລີ ປາຖະກະຖາ 6 ວັນສຳຄັນຕ່າງໆ

(ສພຊ) ເມື່ອເດືອນຕຸລາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ໄດ້ຈັດພິທີປາຖະກະຖາ 6 ວັນປະຫວັດສາດຂອງຊາດ, ຂອງພັກ ຢູ່ທີ່ຫ້ອງປະຊຸມ ສພຂ ໄຊຍະບູລີ ໂດຍການເປັນປະທານຂອງທ່ານ ນາງ ວິລະພອນ ທອງພົມ ຮອງປະທານ ສພຂ; ມີສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານຫລັກແຫລ່ງພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.



ພິທີໃນຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ຮັບຟັງການປາຖະກະຖາ 6 ວັນປະຫວັດສາດຂອງຊາດ, ຂອງພັກ ເປັນຕົ້ນແມ່ນວັນປະກາດເອກະລາດຄົບຮອບ 76 ປີ (12 ຕຸລາ 1945-12 ຕຸລາ 2021), ວັນສ້າງຕັ້ງການທູດລາວ ຄົບຮອບ 76 ປີ (12 ຕຸລາ 1945- 2 ຕຸລາ 2021), ວັນວິທະຍາສາດແຫ່ງຊາດຄົບຮອບ 34 ປີ (12 ຕຸລາ 1987-12 ຕຸລາ 2021), ວັນຄູແຫ່ງຊາດ 7 ຕຸລາ ຄົບຮອບ 27 ປີ (7 ຕຸລາ 1994-7 ຕຸລາ 2021), ວັນລະນຶກວັນສາກົນ ແລະ ສັບປະດາແຫ່ງຊາດເພື່ອລຶບລ້າງຄວາມທຸກຍາກ ຂອງ ສປປລາວ (17 ຕຸລາ 1987 ແລະ 17-24 ຕຸລາ 2003) ແລະ ວັນຊາດ ສປຈີນ ຄົບຮອບ 72 ປີ (1 ຕຸລາ 1949-1 ຕຸລາ 2021) ເຊິ່ງໄດ້ຍົກໃຫ້ເຫັນມູນເຊື້ອອັນພິລະອາດຫານບໍ່ຍອມຈຳນົນຂອງບັນດາບັນພະບູລຸດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າໃນການລຸກຮື້ຂຶ້ນຕໍ່ສູ້ຕ້ານກັບສັດຕູທີ່ເຂົ້າມາຮຸກຮານ, ການເສີມຂະຫຍາຍມູນເຊື້ອວັນປະກາດເອກະລາດ 12 ຕຸລາ, ການເຄື່ອນໄຫວການຕ່າງປະເທດພາຍໃຕ້ການນຳພາຂອງພັກ ກ່ອນປົດປ່ອຍ, ແນວທາງການຕ່າງປະເທດຂອງລາວໃນໄລຍະໃໝ່, ຜົນສຳເລັດການເປີດກວ້າງການພົວພັນສາກົນຂອງ ສປປລາວ, ຍົກໃຫ້ເຫັນວັນຊາດ ສປຈີນ ຄົບຮອບ 72 ປີ ເປັນຕົ້ນແມ່ນຜົນງານໃນການສ້າງສາພັດທະນາປະເທດຊາດໃນໄລຍະຜ່ານມາ, ການພັດທະນາທາງດ້ານເສດຖະກິດ, ການພົວພັນລະຫວ່າງ ສປປລາວ ກັບ ສປຈີນ ແລະ ບັນຫາອື່ນໆ.

(ອິນທີ ຊຽວສີຟ້າ)



## 3 ຄະນະກຳມະການ ສພຂ ຫົວພັນ ຈັດກອງປະຊຸມ ທາບທາມຮ່າງບົດບັນທຶກ ຮ່ວມກັບອົງການປົກຄອງແຂວງ



(ສພຊ) ລະຫວ່າງວັນທີ 26-28 ຕຸລາ 2021 ທີ່ຖ້ຳແຜນການ (ຖ້ຳງູເຫລືອມ) ເມືອງວຽງໄຊ ແຂວງຫົວພັນ ໄດ້ຈັດກອງປະຊຸມທາບທາມຮ່າງບົດບັນທຶກຂອດການປະສານງານລະຫວ່າງ 3 ຄະນະກຳມະການຂອງສະພາປະຊາຊົນແຂວງ (ສພຂ) ຫົວພັນ ກັບພາກສ່ວນທີ່ກ່ຽວຂ້ອງຂອງອົງການປົກຄອງແຂວງ ເປັນຕົ້ນແມ່ນຂົງເຂດຍຸຕິທຳປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ຂົງເຂດວັດທະນາທຳ-ສັງຄົມ ແລະ ຂົງເຂດເສດຖະກິດພາຍໃນແຂວງ ເຊິ່ງກອງປະຊຸມໄດ້ດຳເນີນເປັນສອງວາລະຄື: ວາລະທີ 1 ແມ່ນຂົງເຂດຍຸຕິທຳ, ປກຊ-ປກສ, ສານ ແລະ ອົງການໄອຍະການ ພາຍໃຕ້ການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານ ສພຂ ຫົວພັນ, ວາລະທີ 2 ແມ່ນຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດເສດຖະກິດ ໂດຍການເປັນປະທານຂອງທ່ານ ສົມສັກ ດອນຈານິດ ຮອງປະທານ ສພຂ ຫົວພັນ.

ກອງປະຊຸມຄັ້ງນີ້, ເພື່ອສ້າງບົດບັນທຶກຂອດການປະສານງານ ລະຫວ່າງ 3 ຄະນະກຳມະການຂອງ ສພຂ ຫົວພັນ ຄື: ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະກຳມະການຍຸຕິທຳ ແລະ ປກສ-ປກຊ, ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ກັບບັນດາພະແນກການ, ອົງການທຽບເທົ່າບັນດາສາຂາທະນາຄານ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງ ໃຫ້ມີນິຕິກຳເປັນບ່ອນອີງ ກ່ຽວກັບຂອດການປະສານງານໃຫ້ມີຄວາມສະດວກ, ວ່ອງໄວ ສາມາດປະຕິບັດໄດ້ 3 ພາລະບົດບາດຂອງ ສພຂ ນຳໄປຈັດຕັ້ງປະຕິບັດໄດ້ ແລະ ຮັບໃຊ້ສັງຄົມຢ່າງມີປະສິດທິພາບ-ປະສິດທິຜົນ ແລະ ສາມາດຄຸ້ມຄອງລັດຄຸ້ມຄອງສັງຄົມໄປຕາມລະບຽບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ວາງອອກໃນແຕ່ໄລຍະ ເພື່ອເປັນບ່ອນອີງໃນຂອດການປະສານກັບບັນດາພະແນກການ, ອົງການທຽບເທົ່າ, ບັນດາສາຂາທະນາຄານ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເທື່ອລະກ້າວ.

ໃນກອງປະຊຸມ, ຜູ້ຕາງໜ້າໄດ້ພ້ອມກັນສຸມໃສ່ປະກອບຄຳຄິດ, ຄວາມເຫັນໃສ່ຮ່າງບົດບັນທຶກໃນຂົງເຂດຂອງຕົນເອງກັບຄະນະກຳມະການທີ່ກ່ຽວຂ້ອງ ຢ່າງມີຈຸດສຸມ ແລະ ກົງໄປກົງມາເພື່ອເຮັດໃຫ້ຮ່າງບົດສະຫລຸບດັ່ງກ່າວ ມີເນື້ອໃນຄົບຖ້ວນໃນຂອດການປະສານງານໃຫ້ມີຄວາມສອດຄ່ອງ ແລະ ກົມກຽວກັນ ເພື່ອສະໜອງຂໍ້ມູນໃຫ້ກັນແລະກັນໃຫ້ທັນກຳນົດເວລາ ເພື່ອນຳເຂົ້າພິຈາລະນາ ແລະ ຮັບຮອງຢູ່ໃນກອງປະຊຸມສະໄໝສາມັນຂອງ ສພຂ ໃນແຕ່ລະຄັ້ງ.

ຕອນທ້າຍ, ປະທານກອງປະຊຸມໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບບັນດາຂະແໜງການທີ່ພ້ອມກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດບັນທຶກຢ່າງມີຈຸດສຸມ ແລະ ແທດເໝາະກັບວຽກງານຂອງຕົນ ແລະ ຮຽກຮ້ອງໃຫ້ພະແນກການນຳເອົາຮ່າງບົດສະຫລຸບດັ່ງກ່າວ ໄປຄົ້ນຄວ້ານຳຄະນະກົມກອງຂອງຕົນເອງເພື່ອເອກະພາບແລ້ວຈຶ່ງພ້ອມກັນລົງລາຍເຊັນຮັບຮອງເພື່ອໃຫ້ບົດບັນທຶກມີເນື້ອໃນຄົບຖ້ວນສົມບູນ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

(ເວີນທອງ ແກ້ວບຸນມີ)

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON


# ບົດສຳພາດປະທານສະພາປະຊາຊົນແຂວງໄຊສົມບູນ

**ຮຽງຮຽງໂດຍ: ກົງໃຈ ແສງອຳພັນ**

ທ່ານ ແດງ ປະທຸມທອງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18, ປະທານສະພາປະຊາຊົນແຂວງໄຊສົມບູນ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນໃນວາລະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ໄຂຂຶ້ນໃນວັນທີ 1-17 ພະຈິກນີ້ ໂດຍທ່ານໄດ້ໃຫ້ຮູ້ວ່າ: ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກ ຮອດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງໄຊສົມບູນ ສາມາດປະຕິບັດພາລະບົດບາດໄດ້ ແລະ ມີຜົນສຳເລັດຫລາຍດ້ານດັ່ງນີ້:



**ດ້ານນິຕິບັນຍັດ:** ໄດ້ເຂົ້າຮ່ວມກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງສະພາແຫ່ງຊາດ ເຊິ່ງໃນກອງປະຊຸມດັ່ງກ່າວສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ກໍໄດ້ຍົກສູງສິດພາລະບົດບາດຄວາມຮັບຜິດຊອບຂອງຕົນ, ສຸມສະຕິປັນຍາໃນການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕໍ່ກັບຫລາຍບັນຫາສຳຄັນທີ່ສະພາແຫ່ງຊາດ ນຳມາພິຈາລະນາຄົ້ນຄວ້າໃນສອງກອງປະຊຸມ ເຊິ່ງໄດ້ມີການພິຈາລະນາຮັບຮອງ ແລະ ອອກເປັນມະຕິ ຈຳນວນ 24 ມະຕິ; ໂດຍສຳເລັດການທາບທາມຮ່າງກົດໝາຍ ຈຳນວນ 17 ສະບັບ, ສຳເລັດການຮ່າງນິຕິກຳໃຕ້ກົດໝາຍທີ່ເປັນບ່ອນອີງໃນການເຄື່ອນໄຫວວຽກງານ ຢູ່ຂັ້ນທ້ອງຖິ່ນ ແລະ ໄດ້ເຄື່ອນໄຫວວຽກງານໃນການປະຕິບັດພາລະບົດບາດເປັນຕົວແທນຂອງຜູ້ມີສິດເລືອກຕັ້ງ, ໃນນາມເປັນຕົວແທນຂອງຜູ້ມີສິດເລືອກຕັ້ງ ລົງເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ພົບປະກັບປະຊາຊົນລາວບັນດາເຜົ່າ ຈຳນວນ 1 ເທື່ອ ໂດຍມີ ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ແພດ-ໝໍ, ຄູອາຈານ, ນັກຮຽນ-ນັກສຶກສາ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມທັງໝົດ 2.187 ຄົນ ຍິງ 649 ຄົນ; ນອກຈາກນີ້, ກໍຍັງໄດ້ຕອບບັນຫາຂໍ້ຂ້ອງໃຈຂອງປະຊາຊົນລາວບັນດາເຜົ່າ ໄດ້ຈຳນວນໜຶ່ງ ແລະ ໄດ້ສະເໜີຕໍ່ການນຳຂອງທ້ອງຖິ່ນ ແລະ ການນຳຂອງສະພາແຫ່ງຊາດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

**ການພິຈາລະນາຕົກລົງບັນຫາສຳຄັນຂອງຊາດ:** ໄດ້ເຂົ້າຮ່ວມຄົ້ນຄວ້າພິຈາລະນາຫລາຍບັນຫາສຳຄັນ ເຊັ່ນ: ພິຈາລະນາ, ຮັບຮອງເອົາບັນດາບຸກຄະລາກອນຂອງສະພາແຫ່ງຊາດ ຊຸດທີ IX ແລະ ບຸກຄະລາກອນຂອງລັດຖະບານ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດ ແລະ ບັນຫາອື່ນໆ ໃນກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ; ນອກຈາກນີ້ ກໍໄດ້ເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງ ໄດ້ເຂົ້າຮ່ວມແຕ່ຫົວທີ ໃນການຄົ້ນຄວ້າ ແລະ ພິຈາລະນາບັນຫາສຳຄັນຂອງຊາດ ແລະ ຂອງແຂວງ ຕາມສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນດ້ວຍຄວາມຮັບຜິດຊອບສູງ.

**ການປະຕິບັດພາລະບົດບາດ ຕິດຕາມກວດກາ:**

ຕະຫລອດໄລຍະຜ່ານມາ ໄດ້ເອົາໃຈໃສ່ຕໍ່ວຽກງານການຕິດຕາມກວດກາ ເຊັ່ນ: ການເຂົ້າຮ່ວມກອງປະຊຸມ ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ, ບັນດາກະຊວງ ແລະ ຂອງອົງການປົກຄອງແຂວງ, ຕິດຕາມກວດກາທາງດ້ານເອກະສານຂອງລັດຖະບານ, ບັນດາກະຊວງ, ອົງການປົກຄອງແຂວງ ແລະ ພະແນກການທີ່ກ່ຽວຂ້ອງຢ່າງໃກ້ຊິດ. ເນື່ອງຈາກສະພາບການແຜ່ລະບາດ ຂອງພະຍາດໂຄວິດ-19 ທີ່ຂະຫຍາຍເປັນວົງກວ້າງໃນສັງຄົມ ເຮັດວຽກງານຕິດຕາມກວດກາການຈັດຕັ້ງປະຕິບັດບາງວຽກງານແມ່ນຍັງບໍ່ສາມາດລົງຕິດຕາມກວດກາການຈັດຕັ້ງປະຕິບັດຢູ່ພາກສະໜາມໄດ້. ແຕ່ເຖິງຢ່າງໃດກໍຕາມ ໃນນາມສະມາຊິກສະພາແຫ່ງຊາດ ກໍໄດ້ຕິດຕາມການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍຂອງລັດຖະບານ ແລະ ຂອງອົງການປົກຄອງທ້ອງຖິ່ນ ເຫັນວ່າສັງຄົມມີຄວາມສະຫງົບໂດຍເປັນພື້ນຖານ ບັນດາໂຄງການລົງທຶນຂອງລັດໄດ້ຮັບການຈັດຕັ້ງປະຕິບັດ, ເສດຖະກິດມີການຂະຫຍາຍຕົວເທື່ອລະກ້າວ. ນອກຈາກນີ້, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ກໍໄດ້ຕິດຕາມກວດກາ ບັນດາຜົນກະທົບ, ບັນຫາທາງສຽງສັງຄົມ ພ້ອມທັງການໃຫ້ຄຳປຶກສາທາງດ້ານກົດໝາຍ, ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໄດ້ທັງໝົດ ຈຳນວນ 13 ເລື່ອງ ແກ້ໄຂແລ້ວ 11 ເລື່ອງ ກຳລັງຄົ້ນຄວ້າ 2 ເລື່ອງ.

ທ່ານ ແດງ ປະທຸມທອງ ໄດ້ໃຫ້ຮູ້ຕື່ມອີກວ່າ: ການຈັດຕັ້ງປະຕິບັດສາມພາລະບົດບາດເຫັນວ່າມີຜົນສຳເລັດຫລາຍດ້ານຄືດັ່ງທີ່ກ່າວມາຂ້າງເທິງ. ແຕ່ເຖິງຢ່າງໃດກໍຕາມການຈັດຕັ້ງປະຕິບັດພາລະບົດບາດ ເປັນຕົ້ນແມ່ນດ້ານການຕິດຕາມກວດກາແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ເລິກເຊິ່ງເທົ່າທີ່ຄວນ ເຖິງວ່າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ຈະມີແຜນການເຄື່ອນໄຫວຢ່າງລະອຽດແລ້ວກໍຕາມ ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດ ໂຄວິດ-19 ໄດ້ແຜ່ລາມໃນວົງກວ້າງ ແລະ ສົ່ງຜົນກະທົບໂດຍກົງຕໍ່ການຈັດຕັ້ງປະຕິບັດວຽກງານດ້ານການຕິດຕາມກວດກາທີ່ບໍ່ສາມາດ ປະຕິບັດໄດ້ຕາມແຜນທີ່ວາງໄວ້. ແຕ່ຜົນງານທີ່ໄດ້ມາກໍຍ້ອນວ່າ ມີຂໍ້ສະດວກຫລາຍຢ່າງດັ່ງນີ້: 1) ຍ້ອນມີກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເປັນບ່ອນອີງໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຢ່າງລະອຽດ, ມີຈຸດສຸມ ແລະ ຄ່ອງຕົວດີກວ່າເກົ່າ; 2) ໄດ້ຮັບການເອື້ອອຳນວຍຄວາມສະດວກຈາກສະພາແຫ່ງຊາດ, ອົງການປົກຄອງແຂວງເຮັດໃຫ້ການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໄດ້ສະດວກບາງດ້ານ; 3) ພະນັກງານ-ລັດຖະກອນໄດ້ເອົາໃຈໃສ່ຄົ້ນຄວ້າ, ຈັດຕັ້ງປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ, ມີການວາງແຜນ, ສະຫລຸບສ່ອງແສງລາຍງານ ແລະ ຂໍທິດຊີ້ນຳເປັນປົກກະຕິ; ຄຽງຄູ່ກັບຜົນງານທີ່ກ່າວມານັ້ນກໍເຫັນວ່າ ຍັງມີຂໍ້ຫຍຸ້ງຍາກບາງດ້ານທີ່ເປັນອຸປະສັກໃນການເຄື່ອນໄຫວວຽກງານ ເຊັ່ນ: 1) ອົງການບໍລິຫານລັດບາງພາກສ່ວນ ແລະ ປະຊາຊົນຈຳນວນໜຶ່ງ ຍັງບໍ່ທັນເຂົ້າໃຈເລິກເຊິ່ງຕໍ່ກັບສິດພາລະບົດບາດຂອງອົງການນິຕິບັນຍັດ ຫລື ສິດ, ໜ້າທີ່ຂອງສະມາຊິກສະພາໄດ້ດີເທົ່າທີ່ຄວນ ເຮັດໃຫ້ການປະຕິບັດວຽກງານບາງເທື່ອກໍ່ໃຫ້ເກີດຄວາມຫຍຸ້ງຍາກສັບສົນ ແລະ ຊັກຊ້າບາງຄັ້ງ; 2) ສະມາຊິກສະພາແຫ່ງຊາດເອງ ບາງທ່ານກໍຍັງບໍ່ທັນກຳແໜ້ນ ລະບຽບກົດໝາຍ, ພາລະບົດບາດ ສິດ ແລະໜ້າທີ່ຂອງຕົນໄດ້ດີເທົ່າທີ່ຄວນ; 3) ຈຳນວນວິຊາການທີ່ເປັນເສນາທິການ ຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດ ມີຈຳນວນໜ້ອຍ, ການກຳນົດສິດ ພາລະບົດບາດ ແລະ ການແບ່ງໜ້າວຽກຄວາມຮັບຜິດຊອບໃຫ້ກົງຈັກເສນາທິການຊ່ວຍວຽກ ຍັງບໍ່ທັນລະອຽດຈະແຈ້ງ; 4) ງົບປະມານໃນການເຄື່ອນໄຫວມີໜ້ອຍ ແລະ ຖືກຫລຸດຈຳນວນລົງ ແຕ່ກົງກັນຂ້າມຈຳນວນສະມາຊິກສະພາກັບມີຈຳນວນເພີ່ມຂຶ້ນ ເຮັດໃຫ້ການເຄື່ອນໄຫວວຽກງານບໍ່ໄດ້ຮັບປະສິດທິຜົນສູງ; 5) ການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ການປະຕິບັດສິດ, ໜ້າທີ່ ແລະ ການພົບປະ ປະຊາຊົນບໍ່ທັນທົ່ວເຖິງພາຍໃນເຂດເລືອກຕັ້ງ.

ໂດຍອີງໃສ່ຂໍ້ສະດວກ ແລະຫຍຸ້ງຍາກດັ່ງກ່າວ ຈຶ່ງຖອດຖອນໄດ້ວິທີການແກ້ໄຂ ດັ່ງນີ້: 1) ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ເປັນບ່ອນອີງທີ່ຍົກສູງພາລະບົດບາດຂອງສະມາຊິກສະພາໃຫ້ສູງຂຶ້ນກວ່າເກົ່ານັ້ນ ສະພາແຫ່ງຊາດຄວນມີການສົມທົບແໜ້ນກັບລັດຖະບານ ໃນການຍົກສູງສິດ, ພາລະບົດບາດຂອງສະມາຊິກສະພາໂດຍການຫັນເປັນກົດໝາຍ ຫລືນິຕິກຳສະເພາະທີ່ຍົກສູງອຳນາດນິຕິບັນຍັດໃຫ້ຈະແຈ້ງຂຶ້ນຕື່ມ; 2) ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຕ້ອງໄດ້ຍົກສູງພາລະບົດບາດຂອງຕົນ ໂດຍການຄົ້ນຄວ້າກຳແໜ້ນລະບຽບກົດໝາຍ, ມະຕິ, ຄຳສັ່ງຕ່າງໆທີ່ພົວພັນກັບວຽກງານຂອງຕົນ ເພື່ອສາມາດຮັບຮູ້ ແລະ ຈັດຕັ້ງປະຕິບັດວຽກງານໄດ້ຢ່າງມີປະສິດທິຜົນ; 3) ສ້າງໂອກາດໃຫ້ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ພະນັກງານຊ່ວຍວຽກ ໄດ້ຮຽນຮູ້ບັນດານິຕິກຳ, ກົດໝາຍ, ມະຕິກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ ແລະ ຂໍ້ມູນຕ່າງໆ ເພື່ອຕອບຄວາມສະໜອງໃຫ້ໄດ້ທັນກັບສະພາບຕົວຈິງ ແລະ ມີເນື້ອໃນທີ່ແທດເໝາະແຕ່ລະໄລຍະຂອງທ້ອງຖິ່ນ. 4) ສະເໜີໃຫ້ສະພາແຫ່ງຊາດ ກໍຄືລັດຖະບານຄົ້ນຄວ້າງົບປະມານເພີ່ມເຂົ້າໃນການເຄື່ອນໄຫວວຽກງານຂອງສະມາຊິກສະພາແຫ່ງຊາດຕື່ມ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ ການເປັນຕົວແທນຂອງປະຊາຊົນມີປະສິດທິຜົນສູງຂຶ້ນກວ່າເກົ່າ.

ປະທານສະພາປະຊາຊົນແຂວງໄຊສົມບູນ ຍັງໄດ້ຍົກໃຫ້ເຫັນ ທິດທາງ ແລະ ແຜນການເຄື່ອນໄຫວວຽກງານຈຸດສຸມໃນຕໍ່ໜ້າ ເພື່ອໃຫ້ທ່ານຜູ້ອ່ານໄດ້ຕິດຕາມຕື່ມອີກ ໂດຍທ່ານກ່າວວ່າ: ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວປະຕິບັດວຽກງານຂອງຕົນຕາມພາລະບົດບາດ, ສິດ ແລະ ໜ້າທີ່ກຳ

ອ່ານຕໍ່ໜ້າ 8...

# ບາງຄຳເຫັນຂອງ ສຊຊ ທີ່ມີຕໍ່ບົດລາຍງານຂອງລັດຖະບານ

**ຮຽບຮຽງໂດຍ: ທິດາ ອິ່ງແກ້ວ**

ວັນທີ 1 ພະຈິກ 2021 ໃນກອງປະຊຸມສະໄໝສາມັນເທື່ອທີ 2 ສະພາແຫ່ງຊາດ ຊຸດທີ IX ເຊິ່ງໃນວາລະທຳອິດຂອງກອງປະຊຸມແມ່ນຮັບຟັງບົດລາຍງານຂອງລັດຖະບານ ແລະ ໂອກາດດັ່ງກ່າວ, ທ່ານ ຈອມສີ ລັດຕະນະປັນ ສະມາຊິກສະພາແຫ່ງຊາດ (ສຊຊ) ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ທັງເປັນປະທານຄະນະ ສຊຊ ປະຈຳເຂດເລືອກຕັ້ງ ແລະ ປະທານສະພາປະຊາຊົນແຂວງບໍ່ແກ້ວ ໄດ້ມີຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄືແຜນງົບປະມານແຫ່ງລັດ, ແຜນເງິນຕາປະຈຳປີ 2021 ແລະ ທິດທາງປີ 2022 ເຊິ່ງທ່ານໄດ້ກ່າວວ່າ:



ຂ້າພະເຈົ້າສະແດງຄວາມຊົມເຊີຍ ແລະ ເຫັນດີເຫັນພ້ອມກັບການສະເໜີຂອງລັດຖະບານຕໍ່ກອງປະຊຸມ ເຊິ່ງມີຫລາຍດ້ານ ລັດຖະບານກໍມີຄວາມພະຍາຍາມເຮັດໃຫ້ມີຜົນສຳເລັດເປັນຢ່າງດີ ແຕ່ໄປຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ, ຂ້າພະເຈົ້າເຫັນວ່າຍັງມີບາງດ້ານທີ່ເປັນອັນຫຍຸ້ງຍາກ ແລະ ມີສິ່ງທ້າທາຍທີ່ຈະຕ້ອງໄດ້ເອົາໃຈໃສ່ໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄື ເວົ້າເຖິງຄາດໝາຍສູ້ຊົນດ້ານມະຫາພາກ ຢາກສະເໜີໃຫ້ລັດຖະບານຄົ້ນຄວ້າ, ພິຈາລະນາໃນ 3 ຈຸດຄື ຢາກໃຫ້ປັບປຸງດ້ານນະໂຍບາຍສິດທິທາງການຜະລິດ ເປັນຕົ້ນແມ່ນນະໂຍບາຍໃນການລົງທຶນການສະໜອງແຫລ່ງທຶນເຂົ້າໃນໂຄງການບູລິມະສິດຕ່າງໆ. ພ້ອມກັນນັ້ນ, ກໍແມ່ນສົ່ງເສີມການຕະຫລາດສົ່ງອອກ ຢາກໃຫ້ສົ່ງເສີມການຜະລິດພາຍໃນໃຫ້ມີຄວາມສາມາດສົ່ງອອກເພື່ອເຮັດໃຫ້ການຂາດດຸນ ແລະ ຫລຸດຜ່ອນການນຳເຂົ້າ ເຊິ່ງຜ່ານມາຖືວ່າໄດ້ວາງນະໂຍບາຍແລ້ວແຕ່ວ່າຍັງມີລັກສະນະລວມໆ ບໍ່ທັນກາຍເປັນຕົ້ນເປັນໂຕເທົ່າທີ່ຄວນ ແລະ ເລື່ອງປັບປຸງນະໂຍບາຍການເງິນ-ເງິນຕາ ກໍຄວນໃຫ້ມີຄວາມຄ່ອງຕົວ.

ທ່ານ ຈອມສີ ລັດຕະນະປັນ ກ່າວຕື່ມອີກວ່າ: ກ່ຽວກັບວຽກຈຸດສຸມ 3 ເດືອນທ້າຍປີ ຂ້າພະເຈົ້າຢາກຍົບຍົກບາງບັນຫາ ທີ່ປະທານກອງປະຊຸມໄດ້ເຈາະຈີ້ມ ໂດຍສະເພາະແມ່ນຕໍ່ກັບການລົງທຶນຂອງພາກລັດ ອັນນີ້ກໍເຫັນວ່າຄວນສືບຕໍ່ແກ້ໄຂປັບປຸງຕາມນະໂຍບາຍຕ່າງໆ ໃຫ້ມີຄວາມສອດຄ່ອງກັບສະພາບເງື່ອນໄຂປັດຈຸບັນ ເພື່ອຫລີກລ່ຽງບັນຫາໜີ້ສິນສາທາລະນະທີ່ຈະເພີ່ມຂຶ້ນ ແລະ ລັດຖະບານຄວນຈະສືບຕໍ່ມີນະໂຍບາຍປຸກລະດົມແຫລ່ງທຶນຈາກພາຍໃນ ແລະ ຕ່າງປະເທດ ເອີ້ນເຂົາເຈົ້າເຂົ້າມາລົງທຶນໃນຂະແໜງການຕ່າງໆຢ່າງເໝາະສົມ.

ກ່ຽວກັບວຽກຈຸດສຸມຕິດພັນກັບຂະແໜງວັດທະນາທຳ-ສັງຄົມ ກໍຄືດັ່ງທີ່ພວກເຮົາຮູ້ນຳກັນ ເປັນຕົ້ນແມ່ນຂະແໜງການສຶກສາ ກໍຢາກໃຫ້ມີການສົ່ງເສີມການຮຽນ-ການສອນ ດ້ວຍລະບົບທາງໄກຢ່າງທົ່ວເຖິງ ເຊິ່ງມາຮອດເວລານີ້ເວົ້າລວມແລ້ວຢູ່ແຂວງບໍ່ແກ້ວແມ່ນຍັງບໍ່ທັນໄດ້ເປີດໂຮງຮຽນເທື່ອ ແລະ ຈຸດຫ່າງໄກກໍໄດ້ຢຸດສອນ, ຢຸດຮຽນໄປເລີຍ ຍ້ອນວ່າດົນໆກໍເກີດມີການຕິດເຊື້ອ 1-2 ກໍລະນີ ເຊິ່ງຕິດມາໄດ້ແນວໃດນັ້ນ ພັດບໍ່ສາມາດລະບຸສາເຫດການຕິດໄດ້ ຈຶ່ງຢາກໃຫ້ສົ່ງເສີມການຮຽນແບບທາງໄກໃຫ້ທົ່ວເຖິງ ແຕ່ບໍ່ຮູ້ວ່າຈະມີເງື່ອນໄຂແນວໃດ ເພື່ອກະຕຸກຊຸກຍູ້ການຮຽນດັ່ງກ່າວໃຫ້ເປັນໄປໄດ້ດີ.

ສ່ວນວຽກຂົງເຂດສາທາລະນະສຸກ ເປັນຕົ້ນແມ່ນການປະຕິບັດມາດຕະການຕ້ານການແຜ່ລະບາດຂອງພະຍາດໂຄວິດ-19 ຢາກໃຫ້ສຸມໃສ່ຄືດັ່ງທິດລວມໄດ້ວາງໄວ້ ເຊັ່ນ ການສັກວັກຊີນໃຫ້ທົ່ວເຖິງ ເຊິ່ງປັດຈຸບັນການສັກວັກຊີນຢູ່ແຂວງບໍ່ແກ້ວ ເຂັມ 1 ແມ່ນໄດ້ 40 ປາຍເປີເຊັນ, ເຂັມ 2 ແມ່ນໄດ້ 30 ປາຍເປີເຊັນ ແລະ ໄດ້ຍິນຂ່າວວ່າລັດຖະບານໄດ້ຮັບວັກຊີນຈາກ ສປຈີນ ສະນັ້ນ, ພວກເຮົາກໍພ້ອມກັນຊຸກຍູ້ຊ່ວຍເຫລືອລັດຖະບານ ປຸກລະດົມໃຫ້ປະຊາຊົນໄດ້ສັກວັກຊີນຢ່າງທົ່ວເຖິງ ພວກເຮົາຈຶ່ງຈະສາມາດຄວບຄຸມການແຜ່ລະບາດໄດ້ ແລະ ເອົາໃຈໃສ່ຕໍ່ການເຄື່ອນຍ້າຍແຮງງານ ໂດຍສະເພາະການເຄື່ອນຍ້າຍແຮງງານເຂົ້າ-ອອກຢູ່ແຂວງບໍ່ແກ້ວປັດຈຸບັນພົບຄວາມຫຍຸ້ງຍາກທີ່ສຸດ ເພາະນະໂຍບາຍລວມ, ຄຳສັ່ງ, ມາດຕະການລວມແມ່ນຫ້າມເຄື່ອນຍ້າຍ ແຕ່ຍັງມີບາງກໍລະນີ ພັດມີໃບນຳສົ່ງຂອງຄະນະສະເພາະກິດຈາກຕົ້ນທາງໄປຫາປາຍທາງ ເຊິ່ງເຫັນວ່າຫາກຍັງສືບຕໍ່ນຳແຮງງານເຂົ້າໄປຢ່າງຖືກຕ້ອງໃນກໍລະນີແບບນີ້ ພວກເຮົາອາດຈະບໍ່ສາມາດຢຸດຢັ້ງການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້. ສະນັ້ນ, ການເຄື່ອນຍ້າຍແຮງງານຈຶ່ງຢາກໃຫ້ມີຈຸດສຸມ ໂດຍສຸມໃສ່ແຮງງານທີ່ຈຳເປັນເທົ່ານັ້ນ ເຊັ່ນ ການສ້າງສະໜາມບິນ, ສຸມໃສ່ການຜະລິດ ຫລື ການບໍລິການດ້ານໃດດ້ານໜຶ່ງທີ່ມີຄວາມຕ້ອງການແຮງງານ ເພາະເຫັນວ່າພາກສ່ວນທີ່ໄປສ່ວນຫລາຍແມ່ນໜຸ່ມ-ສາວ ທີ່ຍັງບໍ່ມີຄວາມຮູ້ດ້ານວິຊາສະເພາະເລິກເຊິ່ງປານໃດ.

108 ສາລະ

# ຄວາມໝາຍ, ຂອບເຂດ ແລະ ເຄື່ອງມືທີ່ຊ່ວຍໃນການຕີຄວາມໝາຍລັດຖະທຳມະນູນ

ໂດຍ: ວິລະວົງ ຢູບີນພາກ

ຜ່ານພົ້ນໄປການສະເຫລີມສະຫລອງການປະກາດໃຊ້ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ໄດ້ໝູນວຽນມາບັນຈົບຄົບຮອບ 30 ປີ (15 ສິງຫາ 1991 15 ສິງຫາ 2021) ເຊິ່ງເປັນວັນທີ່ມີຄວາມໝາຍສຳຄັນທາງປະຫວັດສາດຂອງຊາດ ແລະ ເພື່ອເປັນການສະເຫລີມສະຫລອງໃຫ້ແກ່ວັນສຳຄັນດັ່ງກ່າວນັ້ນ ໃນບົດຄວາມ 108 ສາລະສະບັບນີ້, ຜູ້ຂຽນຂໍພາຜູ້ອ່ານມາຮູ້ຈັກກັບຄວາມໝາຍຂອງການຕີຄວາມໝາຍລັດຖະທຳມະນູນ, ຂອບເຂດຂອງການຕີຄວາມໝາຍລັດຖະທຳມະນູນ ແລະ ເຄື່ອງມືທີ່ຊ່ວຍໃນການຕີຄວາມໝາຍລັດຖະທຳມະນູນ.

ລັດຖະທຳມະນູນ ແມ່ນກົດໝາຍພື້ນຖານຂອງລັດ ສະແດງເຖິງເຈດຈຳນົງຂອງຊົນຊັ້ນປົກຄອງ; ກຳນົດລະບອບການເມືອງ, ລະບອບເສດຖະກິດ ແລະ ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ຫລັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດ.

ການຕີຄວາມໝາຍລັດຖະທຳມະນູນ ກໍມີຄວາມໝາຍດຽວກັນກັບການຕີຄວາມໝາຍກົດໝາຍ ພຽງແຕ່ວ່າເນື້ອໃນຂອງການຕີຄວາມໝາຍອາດຈະມີຄວາມແຕກຕ່າງກັນ ແລະ ໃນບາງກໍລະນີນັ້ນ ຄຳວ່າ "ການຕີຄວາມໝາຍກົດໝາຍ" ກໍອາດຈະກ່າວເຖິງໃນຄວາມໝາຍແບບກວ້າງ ເຊິ່ງໝາຍເຖິງການຕີຄວາມໝາຍລັດຖະທຳມະນູນອີກກໍໄດ້; ການຕີຄວາມໝາຍລັດຖະທຳມະນູນ ແມ່ນການຄົ້ນຫາຄວາມໝາຍ ຫລື ເຈຕະນາທີ່ແທ້ຈິງ ຂອງບົດບັນຍັດ ຫລື ເນື້ອໃນ ຂອງລັດຖະທຳມະນູນ ວ່າບົດບັນຍັດ ຫລື ເນື້ອໃນດັ່ງກ່າວນັ້ນ ມີຄວາມໝາຍແບບໃດ, ມີຂອບເຂດພຽງໃດ ແລະ ມີຈຸດປະສົງແນວໃດ; ການຕີຄວາມໝາຍລັດຖະທຳມະນູນ ຈະຕີຄວາມໝາຍກວ້າງຂວາງກວ່າກົດໝາຍທົ່ວໄປ ເພາະວ່າລັດຖະທຳມະນູນແມ່ນກົດໝາຍມະຫາຊົນ ທີ່ມີລັກສະນະ ແລະ ຈຸດປະສົງທີ່ແຕກຕ່າງຈາກກົດໝາຍອື່ນ ແລະ ຫລັກການຄວາມເປັນກົດໝາຍສູງສຸດ ຫລື ກົດໝາຍພື້ນຖານ ຈະຍັງຄົງຢູ່ຕະຫລອດໄປຕາບເທົ່າທີ່ຍັງມີລັດຖະທຳມະນູນຢູ່ ແລະ ອາດຈະມີຜົນຍ້ອນຫລັງໄດ້ ເຊັ່ນ: ການທີ່ມີບົດບັນຍັດ ຫລື ເນື້ອໃນ ຂອງກົດໝາຍທີ່ໄດ້ຮັບຮອງ ກ່ອນການປະກາດໃຊ້ລັດຖະທຳມະນູນສະບັບປັດຈຸບັນ ເຊິ່ງສອດຄ່ອງກັບລັດຖະທຳມະນູນສະບັບກ່ອນ ແຕ່ຖ້າຫາກບໍ່ສອດຄ່ອງກັບລັດຖະທຳມະນູນສະບັບປັດຈຸບັນ ບົດບັນຍັດ ຫລື ເນື້ອໃນຂອງກົດໝາຍນັ້ນອາດຈະຕົກເປັນໂມຄະ ຫລື ບໍ່ສາມາດຈັດຕັ້ງປະຕິບັດໄດ້; ນອກຈາກນັ້ນ, ການຕີຄວາມໝາຍລັດຖະທຳມະນູນມີຄວາມກວ້າງຂວາງກວ່າກົດໝາຍອື່ນກໍເພາະວ່າມີເອກະລັກສະເພາະ ເປັນຕົ້ນຈຸດປະສົງຂອງຄະນະຮັບຜິດຊອບສ້າງຮ່າງລັດຖະທຳມະນູນ, ເຫດການທາງປະຫວັດສາດ ແລະ ຄຳນຳ ຂອງລັດຖະທຳມະນູນ.



ຂອບເຂດຂອງການຕີຄວາມໝາຍລັດຖະທຳມະນູນ ຈະມີຄວາມເຊື່ອມໂຍງກັບເນື້ອໃນທີ່ໄດ້ກຳນົດເອົາໄວ້ ໝາຍຄວາມວ່າ ຖ້າຫາກບໍ່ມີເນື້ອໃນທີ່ລັດຖະທຳມະນູນກຳນົດໄວ້ ຫລື ບົດບັນຍັດຂອງລັດຖະທຳມະນູນ ບໍ່ສາມາດຂະຫຍາຍຄວາມໄປເຖິງເນື້ອໃນນັ້ນໄດ້ ຜົນຂອງການຕີຄວາມໝາຍລັດຖະທຳມະນູນກໍຈະຢູ່ເໜືອຂອບເຂດ ຂອງເນື້ອໃນ ຫລື ບົດບັນຍັດນັ້ນ ເຊິ່ງສາມາດອະທິບາຍໄດ້ວ່າ ເປັນການຕີຄວາມໝາຍເນື້ອໃນ ຫລື ບົດບັນຍັດທີ່ຢູ່ນອກຂອບເຂດຂອງລັດຖະທຳມະນູນ ເຖິງວ່າຈະມີກົດເກນ ຫລື ປະເພນີ ທີ່ບໍ່ໄດ້ກຳນົດໄວ້ເປັນລາຍລັກອັກສອນ ແຕ່ກົດເກນ ຫລື ປະເພນີນັ້ນ ກໍບໍ່ສາມາດຈະຂັດຕໍ່ເນື້ອໃນ ຫລື ບົດບັນຍັດທີ່ເປັນລາຍລັກອັກສອນ ຂອງລັດຖະທຳມະນູນໄດ້ນັ້ນເອງ.

ເຄື່ອງມືທີ່ຊ່ວຍໃນການຕີຄວາມໝາຍລັດຖະທຳມະນູນ ນອກຈາກບົດບັນຍັດ, ເນື້ອໃນ, ຄຳສັບ, ເນື້ອຄວາມ ແລະ ຄຳນຳ ຂອງລັດຖະທຳມະນູນແລ້ວ ຍັງມີສິ່ງອື່ນທີ່ຢູ່ພາຍນອກລັດຖະທຳມະນູນທີ່ອາດຈະສາມາດເປັນເຄື່ອງມືຊ່ວຍໃນການຕີຄວາມໝາຍລັດຖະທຳມະນູນໄດ້ ເປັນຕົ້ນ ບົດລາຍງານການຮ່າງລັດຖະທຳມະນູນ ບໍ່ວ່າຈະເປັນບົດລາຍງານຂອງຄະນະຮັບຜິດຊອບສ້າງຮ່າງລັດຖະທຳມະນູນ ຫລື ບົດລາຍງານການສ້າງຮ່າງລັດຖະທຳມະນູນຕໍ່ກອງປະຊຸມສະພາແຫ່ງຊາດ, ບົດບັນຍັດ ຫລື ເນື້ອໃນຂອງລັດຖະທຳມະນູນສະບັບກ່ອນ ເຊິ່ງອາດຈະສະແດງຄວາມຄ້າຍຄື ຫລື ແຕກຕ່າງກັນ ໃນການນຳໃຊ້ຄຳສັບເພື່ອປຽບທຽບກັບລັດຖະທຳມະນູນສະບັບປັດຈຸບັນ ຫລື ບົດບັນຍັດຂອງກົດໝາຍ ທີ່ສາມາດທຽບຄຽງໄດ້ກັບບົດບັນຍັດຂອງລັດຖະທຳມະນູນ ທີ່ຈະຕ້ອງຕີຄວາມໝາຍ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຕີຄວາມໝາຍບົດບັນຍັດຂອງລັດຖະທຳມະນູນ ແລະ ກົດໝາຍໃນເມື່ອກ່ອນ ເຊິ່ງພໍທີ່ຈະທຽບໄດ້ກັບບົດບັນຍັດຂອງລັດຖະທຳມະນູນທີ່ຈະຕ້ອງຕີຄວາມໝາຍ, ວັດຈະນານຸກົມ ແລະ ຕຳລາທາງກົດໝາຍລັດຖະທຳມະນູນ ລວມທັງຄຳເຫັນຂອງນັກກົດໝາຍຜູ້ຊົງຄຸນວຸດທິຕ່າງໆ ກໍສາມາດເປັນເຄື່ອງມືທີ່ຊ່ວຍໃນການຕີຄວາມໝາຍລັດຖະທຳມະນູນໄດ້ເຊັ່ນດຽວກັນ.

ສະຫລຸບລວມແລ້ວ ການຕີຄວາມໝາຍລັດຖະທຳມະນູນ ເປັນການຄົ້ນຄວ້າຫາຄວາມໝາຍ ຫລື ເຈຕະນາທີ່ແທ້ຈິງ ຂອງບົດບັນຍັດຂອງລັດຖະທຳມະນູນ ວ່າບົດບັນຍັດນັ້ນມີຄວາມໝາຍແບບໃດ ເຊິ່ງຄວນຕີຄວາມໝາຍໃຫ້ກວ້າງຂວາງກວ່າກົດໝາຍທຳມະດາ ເນື່ອງຈາກວ່າລັດຖະທຳມະນູນເປັນກົດໝາຍມະຫາຊົນ ທີ່ມີລັກສະນະ ແລະ ຈຸດປະສົງ ທີ່ແຕກຕ່າງຈາກກົດໝາຍທຳມະດາ ແລະ ບໍ່ສາມາດນຳເອົາຫລັກການຂອງກົດໝາຍອື່ນ ທີ່ບໍ່ແມ່ນຫລັກການຂອງລັດຖະທຳມະນູນມານຳໃຊ້ໃນການຕີຄວາມໝາຍລັດຖະທຳມະນູນ ເພາະວ່າລັດຖະທຳມະນູນມີຫລັກການຂອງຄວາມເປັນເປັນກົດໝາຍສູງສຸດ ດັ່ງນັ້ນ, ການຕີຄວາມໝາຍລັດຖະທຳມະນູນ ກໍຕ້ອງຕີຄວາມໝາຍຕາມທີ່ລັດຖະທຳມະນູນໄດ້ກຳນົດໄວ້ເທົ່ານັ້ນ.

ສຳລັບຂັ້ນຕອນຂອງການຕີຄວາມໝາຍລັດຖະທຳມະນູນ ກໍເປັນບັນຫາໜຶ່ງທີ່ຜູ້ຂຽນຈະຄົ້ນຄວ້າ ເພື່ອນຳມາສະເໜີຕໍ່ຜູ້ອ່ານໃນສະບັບຕໍ່ໄປ.

## ສາລາກະວີ

# ຢ່າໃຫ້ກາຍເປັນຖັງຂີ້ເຫຍື້ອ

#ດອກຊ້ອນ ດອນໂຊງ

❋ ຢາກໃຫ້ສື່ສິ່ງນີ້
ຄົນຄວນປັບ
ເປັນດັ່ງຂອງໝາຍໃຫ້
ຍັງມີການເລືອກເຟັ້ນ

ຊົມຊອບຍອມຮັບ
ປ່ຽນແປງນຳໃຊ້
ສັງຄະຫານຖວາຍທອດ
ໂຮມໄວ້ທີ່ໂອ

❋ ດູດດັ່ງເຂົ້າ
ເຂົ້າເປືອກພັນແນວໃດ
ຜົນອອກມາເປັນເຂົ້າ
ສີເຂົ້າໜຽວບໍ່ທ່ອນເປັນເຂົ້າຈ້າວ

ຜອງຮ່າຍໝາຍສີ
ໃສ່ໜຽວຫລືຈ້າວ
ບໍລິບູນສີອອກ
ແປປົ້ນປ່ຽນໄປ ດອກນ່າ!

❋ ຂໍ້ມູນທີ່ສົ່ງເຂົ້າ
ຕົນສິ່ງແນວແນລົບ
ບໍ່ໝາຍເປັນໄປໄດ້
Input ເປັນແນວໃດ Output ຍ່ອມບອກແຈ້ງ

ຍໍຍື່ນອອນລາຍ ມານັ້ນ
ມຸ່ງປະສົງທາງຮ້າຍ
ກາຍພັນຜະລິດອອກ
ເຖິງຜົນຊ້ອນສືບສາຍ

❋ ອັນໜຶ່ງສິ່ງຊົ່ວຮ້າຍ
ພາບຂ່າວແນວທຳລາຍ
ເປັນແຫລ່ງທີ່ນຜາງຮ້າຍ
ສື່ອອນລາຍຈະອ່ອນຫລາຍເມື່ອໃຊ້ ໃສ່ແຕ່ແນວຂີ້ຮ້າຍ

ໃນໂລກທັງປວງ
ເລື່ອງອະບາຍວາຍວຸ້ນ
ໝາຍໂຍນຍໍມອບ
ເໝືອນຖັງຂີ້ເຫຍື້ອລົງ

❋ ຜິດຖືກຕ້ອງຮັບຮູ້
ເລີ່ມຈາກຕົນຄົນທຳ
ສື່ສ້າງສັນໝາຍໃຫ້
ຂົນແຕ່ສິ່ງອວ່າຍຮ້າຍ

ຂຶ້ນຢູ່ມືຕົນ
ມຸ່ງປະສົງຈິງສ້າງ
ອາໄສແຮງຍູ້ສົ່ງ
ຈະເປັນໄດ້ສື່ທີ່ດີ ບໍ່ນໍ!



## ສຸກສະບາຍຫາຍໂຣຄ

# ພຶດຕິກຳທີ່ບໍ່ຄວນເຮັດ ເພາະເປັນການທຳຮ້າຍເສັ້ນຜົມ

ໂດຍ ສາວແອ່ນ



**1. ສະຜົມເປັນປະຈຳທຸກມື້:** ການຮັກສາຄວາມສະອາດ ໂດຍການສະຜົມທຸກມື້ຟັງແລ້ວເປັນເລື່ອງທີ່ດີ ແຕ່ຄວາມເປັນຈິງແລ້ວ ຖ້າສະຜົມທຸກມື້ຈະເຮັດໃຫ້ໜັງຫົວແຫ້ງ, ສູນເສຍຄວາມຊຸ່ມຊື່ນ, ເສັ້ນຜົມກໍຈະເລີ່ມແຫ້ງ, ແຕກປາຍ ແລະ ຂາດງ່າຍ; ດັ່ງນັ້ນ, ຄວນສະຜົມ 2-3 ມື້ຕໍ່ເທື່ອໜຶ່ງ ແຕ່ກໍຕ້ອງຂຶ້ນກັບສະພາບໜັງຫົວ ແລະ ກິດຈະກຳຂອງແຕ່ລະຄົນໃນແຕ່ລະມື້ນຳອີກ.

**2. ສະຜົມດ້ວຍນ້ຳຮ້ອນໂພດ ຫລື ເຢັນໂພດ:** ອຸນຫະພູມຂອງນ້ຳທີ່ເໝາະສົມສຳລັບການສະຜົມແມ່ນອຸນຫະພູມຫ້ອງປົກກະຕິ ບໍ່ຮ້ອນໂພດ ຫລື ເຢັນໂພດ ເພາະຈະເຮັດໃຫ້ເສັ້ນຜົມແຫ້ງ.

**3. ຫວີຜົມເລື້ອຍໆ:** ການຫວີຜົມເລື້ອຍໆບໍ່ໄດ້ເຮັດໃຫ້ຜົມງາມຂຶ້ນແຕ່ຢ່າງໃດເລີຍ ກົງກັນຂ້າມກັບເປັນການທຳຮ້າຍເສັ້ນຜົມຫລາຍກວ່າ ເພາະຍິ່ງຫວີຜົມຫລາຍກໍຍິ່ງຈະດຶງຮາກຜົມຫລາຍຍິ່ງຂຶ້ນ ຫວີຈະສຽດສີເສັ້ນຜົມຈົນເກັດຜົມເປີດອອກ ເຮັດໃຫ້ສູນເສຍຄວາມຊຸ່ມຊື່ນ ເຊິ່ງອາດຈະກໍ່ໃຫ້ເກີດບັນຫາຜົມບາງ ແລະ ຜົມຫລົ່ນນຳອີກ.

**4. ຫວີຜົມຕອນຜົມປຽກ:** ຕອນຜົມປຽກເປັນຊ່ວງເວລາທີ່ຜົມ ແລະ ຮາກຜົມອ່ອນແອທີ່ສຸດ ຖ້າຫວີໃນຊ່ວງເວລານີ້ກໍຈະເຮັດໃຫ້ເສັ້ນຜົມຂາດ ແລະ ຫລົ່ນງ່າຍ ເຖິງຈະໃຊ້ຫວີແຂ້ວຫ່າງກໍຕາມ ແຕ່ກໍຍັງສ່ຽງຢູ່ດີ ຄວນຫວີຜົມຕອນໃກ້ຊິແຫ້ງຈະເປັນການດີທີ່ສຸດ.

**5. ຖືກຄວາມຮ້ອນຫລາຍເກີນໄປ:** ເມື່ອອອກກາງແຈ້ງທີ່ມີແສງແດດກ້າ ຄວນກັ້ງຄັນຮົ່ມ ຫລື ໃສ່ໝວກ ເພື່ອປ້ອງກັນເສັ້ນຜົມຈາກລັງສີຢູວີ ແຕ່ບໍ່ແມ່ນພຽງແຕ່ແສງແດດເທົ່ານັ້ນ ຄວາມຮ້ອນຈາກອຸປະກອນເສີມສວຍຕ່າງໆກໍຄວນຫລີກລ່ຽງເຊັ່ນດຽວກັນ ເປັນຕົ້ນໄດເປົ່າຜົມ, ເຕົາລີດຜົມໄຟຟ້າ... ເພາະຈະເຮັດໃຫ້ເສັ້ນຜົມແຫ້ງ, ບາງລົງ ແລະ ສີຜົມກໍຊີດລົງ ກ່ອນໃຊ້ອຸປະກອນຕ່າງໆຄວນສີດສະເປປ້ອງກັນຄວາມຮ້ອນກ່ອນທຸກຄັ້ງ.

**6. ປ່ຽນສີຜົມຫລາຍເກີນໄປ:** ລອງສັງເກດວ່າເສັ້ນຜົມຂອງທ່ານແຫ້ງ ແລະ ຫຍາບຂຶ້ນທຸກເທື່ອທີ່ປ່ຽນສີຜົມໃໝ່ບໍ ຖ້າແມ່ນ ສະແດງວ່າທ່ານປະສົບບັນຫາຈາກສານເຄມີສະສົມຈາກນ້ຳຢາປ່ຽນສີຜົມ ເຊິ່ງຖ້າຍັງເຮັດຄືເກົ່າຕໍ່ໄປ ບັນຫາອາດເກີດເຖິງຂັ້ນຜົມຂາດ ແລະ ຫລົ່ນໝົດເລີຍກໍເປັນໄດ້ ຄວນເລືອກໃຊ້ເຄມີປ່ຽນສີຜົມທີ່ບໍ່ມີສານແອມໂມເນຍ ເພື່ອທຳຮ້າຍເສັ້ນຜົມໃຫ້ນ້ອຍທີ່ສຸດ ແລະ ຄວນເວັ້ນໄລຍະເວລາໃຫ້ຜົມໄດ້ພັກແດ່.

**7. ບຳລຸງຫລາຍເກີນໄປ:** ໃນຜະລິດຕະພັນບຳລຸງຜົມຕ່າງໆລ້ວນແຕ່ມີສານອາຫານທີ່ໃຫ້ໂປຣຕີນປະສົມຢູ່ ເຊິ່ງໂປຕີນເຫລົ່ານີ້ເປັນໂຕຊ່ວຍເພີ່ມຄວາມແຂງແຮງ ແລະ ເພີ່ມຄວາມເງົາງາມໃຫ້ແກ່ເສັ້ນຜົມ ແຕ່ການບຳລຸງຫລາຍເກີນໄປຈະເຮັດໃຫ້ໜັງຫົວມັນ ແລະ ເສັ້ນຜົມໜັກເກີນໄປຈົນຂາດ ແລະ ຫລົ່ນໄດ້ ສະນັ້ນ, ຄວນເລືອກໃຊ້ຜະລິດຕະພັນທີ່ເໝາະສົມກັບເສັ້ນຜົມອີຫລີ.

**ຂໍ້ມູນຈາກ:**
**www.praewwedding.com**

**ກົດໝາຍ ວ່າດ້ວຍການລົດໄຟ**

ຕໍ່ຈາກສະບັບກ່ອນ...

**ມາດຕາ 36 ຄາດໝາຍຂອງການ ສຳຫຼວດ, ອອກແບບ ໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງລົດໄຟ**

ການສຳຫຼວດ, ອອກແບບ ໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງລົດໄຟ ມີຄາດໝາຍຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບຈຸດປະສົງຂອງໂຄງການ;
2. ຮັບປະກັນຄວາມ ຊັດເຈນ, ຖືກຕ້ອງຕາມກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກຂອງໂຄງ ການແຕ່ລະປະເພດ ພ້ອມທັງສິ່ງເສີມການນຳໃຊ້ວັດສະດຸກໍ່ສ້າງພາຍໃນ;
3. ຮັບປະກັນໃຫ້ບໍລິມາດ ແລະ ມູນຄ່າໂຄງການທີ່ຄິດໄລ່ນັ້ນ ໃກ້ຄຽງກັບມູນຄ່າຕົວຈິງທີ່ສຸດ;
4. ຮັບປະກັນປະສິດທິຜົນດ້ານເສດຖະກິດ-ສັງຄົມ, ຜົນປະໂຫຍດລວມຂອງຊາດ ແລະ ປະຊາຊົນ;
5. ຮັບປະກັນການ ອະນຸລັກ, ປົກປັກຮັກສາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ຊັບສິນສາທາລະນະ, ຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນຂອງ ບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ.

**ມາດຕາ 37 ເນື້ອໃນຂອງການ ສຳຫຼວດ, ອອກແບບ ໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງລົດໄຟ**

ການສຳຫຼວດ,ອອກແບບ ໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງລົດໄຟ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນກ່ຽວກັບສະພາບຕົວຈິງດ້ານ ພູມສາດ, ພູມສັນຖານ, ທໍລະນີສາດ, ຄື້ນແຜ່ນດິນໄຫວ, ຊົນລະສາດ, ຊົນລະທານ, ອຸທົກກະສາດ, ສະຖາປັດຕະຍະກຳ, ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເພື່ອສຳຫຼວດ,ອອກແບບທາງລົດໄຟ, ສະຖານີ, ອາຄານ, ເຮືອນພັກ ແລະ ສິ່ງອຳນວຍຄວາມສະດວກອື່ນ;
2. ແຜນຜັງສະຖາປັດຕະຍະກຳ, ແຜນຜັງວິສະວະກຳ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ;
3. ບໍລິມາດ ແລະ ມູນຄ່າໂຄງການ.

**ມາດຕາ 38 ການຮັບຮອງ ເອກະສານການສຳຫຼວດ, ອອກແບບ ໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງລົດໄຟ**

ເອກະສານການສຳຫຼວດ, ອອກແບບ ໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງລົດໄຟ ປະກອບ ດ້ວຍ ແຜນຜັງສະຖາປັດຕະຍະກຳ, ແຜນຜັງວິສະວະກຳ, ແຜນຜັງເຕັກນິກ ແລະ ແຜ່ນແຕ້ມລະອຽດ.

ເອກະສານການສຳຫຼວດ, ອອກແບບໂຄງການທີ່ຖືກຕ້ອງ ຕາມມາດຕະຖານເຕັກນິກ, ກຳນົດໝາຍເຕັກນິກ ແລະ ວັດສະດຸກໍ່ສ້າງ ລວມທັງໃບປະເມີນມູນຄ່າ ແລະ ແຜນດຳເນີນງານໂຄງການ ຈະຖືກຮັບຮອງໂດຍກະຊວງໂຍທາທິການ ແລະ ຂົນສົ່ງ.

### ໝວດທີ 4
### ການກຳນົດພື້ນທີ່ໂຄງການກໍ່ສ້າງທາງລົດໄຟ ແລະ ການຊົດເຊີຍການເວນຄືນ

**ມາດຕາ 39 ການກຳນົດພື້ນທີ່ໂຄງການກໍ່ສ້າງທາງລົດໄຟ**

ພື້ນທີ່ໂຄງການກໍ່ສ້າງທາງລົດໄຟ ປະກອບດ້ວຍ ພື້ນທີ່ທາງລົດໄຟ, ສະຖານີ, ອາຄານ, ເຮືອນພັກ, ເຂດສະຫງວນ ແລະ ສິ່ງອຳນວຍຄວາມສະດວກ.

ການກຳນົດພື້ນທີ່ໂຄງການກໍ່ສ້າງທາງລົດໄຟ ໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການລົດໄຟ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ;
2. ກຳນົດ ພື້ນທີ່ ແລະ ເວລາໃນການສະໜອງພື້ນທີ່ໂຄງການ ໃຫ້ສອດຄ່ອງກັບຕາຕະລາງເວລາຂອງແຜນດຳເນີນງານທີ່ໄດ້ຮັບຮອງ ຫຼື ຕາມການຕົກລົງຂອງຂະແໜງການທີ່ກ່ຽວຂ້ອງ ໂດຍປະສານສົມທົບກັບອົງການປົກ ຄອງທ້ອງຖິ່ນ;
3. ສ້າງແຜນການຊົດເຊີຍ, ທົດແທນຄວາມເສຍຫາຍທີ່ມີຂໍ້ມູນອ້າງອີງຢ່າງຖືກຕ້ອງ, ໜັກແໜ້ນ, ຄົບຖ້ວນແລະ ມີການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການສະໜອງພື້ນທີ່ກ່ອນເລີ່ມຕົ້ນໂຄງການໃຫ້ສອດຄ່ອງກັບກົດໝາຍ;
4. ມີຄະນະຮັບຜິດຊອບແກ້ໄຂການສະໜອງພື້ນທີ່ ໂດຍແມ່ນອົງການປົກຄອງທ້ອງຖິ່ນ ເປັນຫົວໜ້າ.

**ມາດຕາ 40 ການເວນຄືນທີ່ດິນໂຄງການກໍ່ສ້າງທາງລົດໄຟ**

ເມື່ອລັດຕ້ອງການນຳໃຊ້ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີເອກະສານກ່ຽວກັບສິດນຳໃຊ້ທີ່ດິນຖືກຕ້ອງຕາມກົດໝາຍ ແລະ ທີ່ດິນທີ່ມີສິດນຳໃຊ້ຕາມປະເພນີ ເພື່ອກິດຈະການ ການລົດໄຟ ລັດຕ້ອງເວນຄືນທີ່ດິນດັ່ງກ່າວ ຕາມກົດໝາຍ.

ສຳລັບທີ່ດິນທີ່ບໍ່ມີເອກະສານກ່ຽວກັບສິດນຳໃຊ້ ລັດຈະບໍ່ທົດແທນຄ່າເສຍຫາຍທີ່ດິນດັ່ງກ່າວ ແຕ່ຈະໄດ້ຮັບການທົດແທນຄ່າເສຍຫາຍຕໍ່ການສູນເສຍສິ່ງປຸກສ້າງ, ຕົ້ນໄມ້ ແລະ ຜົນລະປູກ ຕາມມູນຄ່າປ່ຽນແທນທີ່ຄິດໄລ່ໄວ້.

**ມາດຕາ 41 ການ ຊົດເຊີຍ, ທົດແທນ ຄ່າເສຍຫາຍ**

ການຊົດເຊີຍ, ທົດແທນ ຄ່າເສຍຫາຍ, ການຍົກຍ້າຍ ທີ່ຢູ່ອາໄສ ແລະ ສິ່ງກີດຂວາງ ຕ້ອງປະຕິບັດໃຫ້ສຳ ເລັດກ່ອນການສະໜອງພື້ນທີ່ໂຄງການ ໂດຍປະສານສົມທົບລະຫວ່າງ ໂຄງການ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ດ້ວຍການສ້າງສັນຍາມອບຮັບໄວ້ເປັນຫຼັກຖານ.

ການຊົດເຊີຍ, ທົດແທນ ຄ່າເສຍຫາຍ ທີ່ເກີດຂຶ້ນຈາກການສະໜອງພື້ນທີ່ໂຄງການກໍ່ສ້າງທາງລົດໄຟໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຜົນປະໂຫຍດລວມຂອງຊາດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຢ່າງສົມເຫດສົມຜົນ;
2. ຮັບປະກັນໃຫ້ຜູ້ຖືກຍົກຍ້າຍມີທີ່ຢູ່ອາໄສ ແລະ ຊີວິດການເປັນຢູ່ ທີ່ດີກວ່າລະດັບກ່ອນການຍົກຍ້າຍ;
3. ຮັບປະກັນຄວາມຍຸຕິທຳ, ສະເໝີພາບ, ໂປ່ງໃສ ແລະ ຖືກຕ້ອງຕາມກົດໝາຍ.
4. ຮັບປະກັນການປະຕິບັດການ ຊົດເຊີຍ, ທົດແທນ ຄ່າເສຍຫາຍຕາມເປົ້າໝາຍໂຄງການກໍ່ສ້າງທາງລົດໄຟ ເປັນຕົ້ນ ໂຄງການລົງທຶນ ຂອງລັດ, ລັດຮ່ວມທຶນ ແລະ ເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

ສຳລັບການຊົດເຊີຍ, ທົດແທນ ຄ່າເສຍຫາຍ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຈັດສັນ ພູມລຳເນົາ ແລະ ອາຊີບ.

**ມາດຕາ 42 ການສະໜອງພື້ນທີ່ໃຫ້ໂຄງການກໍ່ສ້າງທາງລົດໄຟ**

ຜູ້ທີ່ໄດ້ຖືກເວນຄືນທີ່ດິນ ຕ້ອງໄດ້ສະໜອງພື້ນທີ່ໃຫ້ໂຄງການກໍ່ສ້າງທາງລົດໄຟ ເມື່ອໄດ້ຮັບຄ່າຊົດເຊີຍ,ທົດແທນ ຄ່າເສຍຫາຍແລ້ວ.

**ມາດຕາ 43 ການຄຸ້ມຄອງທີ່ດິນໂຄງການກໍ່ສ້າງທາງລົດໄຟ**

ທີ່ດິນໂຄງການກໍ່ສ້າງທາງລົດໄຟ ແມ່ນ ພື້ນທີ່ໂຄງການກໍ່ສ້າງທາງລົດໄຟ ແລະ ແຫຼ່ງວັດສະດຸກໍ່ສ້າງ ເປັນ ຕົ້ນ ບໍ່ດິນ, ບໍ່ຫີນ, ບໍ່ຊາຍ ທີ່ສະຫງວນໄວ້ສຳລັບໂຄງການກໍ່ສ້າງທາງລົດໄຟ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງທີ່ດິນໂຄງການກໍ່ສ້າງທາງລົດໄຟ ດ້ວຍການສຳຫຼວດປັກຫຼັກໝາຍຂອບເຂດຂອງທີ່ດິນໂຄງການກໍ່ສ້າງທາງລົດໄຟ ແລະ ນຳສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາຂຶ້ນບັນຊີ ແລະ ຈົດທະບຽນເປັນທີ່ດິນໂຄງການກໍ່ສ້າງທາງລົດໄຟ ພ້ອມທັງນຳໃຊ້ ແລະ ປົກປັກຮັກສາ ໃຫ້ມີປະ ສິດທິພາບ, ຮັບປະກັນບໍ່ໃຫ້ມີການບຸກລຸກ ຫຼື ນຳໃຊ້ທີ່ດິນໂຄງການກໍ່ສ້າງທາງລົດໄຟໄປສູ່ເປົ້າໝາຍອື່ນ.

### ໝວດທີ 5
### ການຈັດຕັ້ງປະຕິບັດໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງລົດໄຟ

**ມາດຕາ 44 ການກໍ່ສ້າງທາງລົດໄຟ**

ການກໍ່ສ້າງທາງລົດໄຟ ມີ ດັ່ງນີ້:

1. ການກໍ່ສ້າງທາງລົດໄຟໃໝ່ ຕ້ອງເລີ່ມຈາກການສຶກສາຄວາມເປັນໄປໄດ້, ສຳຫຼວດ, ອອກແບບ, ດຳ ເນີນການກໍ່ສ້າງ, ຕິດຕັ້ງໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງລົດໄຟ ຈົນສຳເລັດການກໍ່ສ້າງ;
2. ການກໍ່ສ້າງທາງລົດໄຟຄືນໃໝ່ ຕ້ອງເລີ່ມຈາກການສຳຫຼວດ, ອອກແບບ ແລະ ດຳເນີນການກໍ່ສ້າງຊ່ວງທາງລົດໄຟເກົ່າທັງໝົດ ໃຫ້ໄດ້ຕາມຂະໜາດ ແລະ ມາດຕະຖານເຕັກນິກເດີມ;
3. ການຍົກລະດັບມາດຕະຖານທາງລົດໄຟ ຕ້ອງເລີ່ມຈາກການສຶກສາ

ອ່ານຕໍ່ສະບັບໜ້າ...

---

ຖະແຫລງ...

ການປະຈຳປີ 2022; ຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2020 ທີ່ສະເໜີໂດຍທ່ານ ມະໄລທອງ ກົມມະສິດ ປະທານອົງການກວດສອບແຫ່ງລັດ.

ເນື້ອໃນເອກະສານ 2 ສະບັບດັ່ງກ່າວ ລ້ວນແລ້ວແຕ່ເປັນບັນຫາສຳຄັນ, ຕິດພັນກັບການແກ້ໄຂວາລະແຫ່ງຊາດ ແລະ ວຽກງານຂອງອົງການລັດເຮົາ. ພາຍຫລັງທີ່ໄດ້ຮັບຟັງການລາຍງານຈາກ 2 ອົງການແລ້ວ, ກອງປະຊຸມ ໄດ້ມອບໃຫ້ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຕາງໜ້າ ຄປຈ.ສພຊ ມີຄຳເຫັນຕໍ່ບົດລາຍງານດັ່ງກ່າວ. ພ້ອມນັ້ນ ປະທານກອງປະຊຸມ ໄດ້ເຈາະຈີ້ມເພື່ອເປັນທິດທາງໃຫ້ບັນດາທ່ານ ສະມາຊິກສະພາແຫ່ງຊາດ ປະກອບຄຳເຫັນຢ່າງມີຈຸດສຸມຕໍ່ບົດລາຍງານ 2 ສະບັບ. ໂດຍລວມເຫັນວ່າ ບັນດາທ່ານ ສະມາຊິກສະພາແຫ່ງຊາດ ຊຸດທີ IX ໄດ້ເອົາໃຈໃສ່ສຸມສະຕິປັນຍາ ລົງເລິກຄົ້ນຄວ້າ, ວິເຄາະ-ວິໄຈ ແລະ ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ ດ້ວຍຄວາມຮັບຜິດຊອບສູງ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ພ້ອມກັນນັ້ນ ກໍໄດ້ສະເໜີກົນໄກ, ວິທີການ ແລະ ມາດຕະການ ເພື່ອໃຫ້ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ນຳໄປສືບຕໍ່ປັບປຸງແກ້ໄຂ ການຈັດຕັ້ງປະຕິບັດວຽກງານຂອງຂະແໜງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ ເຊິ່ງສາມາດສັງລວມການປະກອບຄຳເຫັນໄດ້ທັງໝົດ 29 ເທື່ອຄົນ ຍິງ 6 ເທື່ອຄົນ.

ຄຳເຫັນຂອງບັນດາທ່ານ ສະມາຊິກສະພາແຫ່ງຊາດ ກໍແມ່ນການສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ທັງສອງອົງການ ທີ່ໄດ້ມີຄວາມພະຍາຍາມປະຕິບັດພາລະບົດບາດຂອງຕົນ ຕາມກົດໝາຍ ຢ່າງຕັ້ງໜ້າ ເຮັດໃຫ້ສາມາດແກ້ໄຂບັນຫາການສໍ້ລາດບັງຫລວງ ໃນຖັນແຖວພະນັກງານລັດ, ຫລຸດຜ່ອນການລະເມີດວິໄນແຜນການ-ການເງິນຂອງຫົວໜ່ວຍງົບປະມານລັດ ແລະ ເກັບກູ້ຄືນໄດ້ຜົນເສຍຫາຍທາງດ້ານການເງິນ ແລະ ວັດຖຸເຂົ້າງົບປະມານລັດ ເຮັດໃຫ້ສັງຄົມມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ. ພ້ອມນັ້ນ ສະມາຊິກສະພາແຫ່ງຊາດ ກໍໄດ້ສະແດງຄວາມເປັນຫວ່ງເປັນໃຍ ແລະ ສະເໜີໃຫ້ເອົາໃຈໃສ່ບາງບັນຫາສຳຄັນ ເຊິ່ງສາມາດສັງລວມເນື້ອໃນພົ້ນເດັ່ນ ດັ່ງນີ້:

ສະມາຊິກສະພາແຫ່ງຊາດ ໄດ້ສະເໜີໃຫ້ 2 ອົງການ ເອົາໃຈໃສ່ແກ້ໄຂຜົນການກວດກາ ແລະ ຜົນການກວດສອບ ໂດຍໃຫ້ມີການໄຈ້ແຍກຂໍ້ມູນລະອຽດຈະແຈ້ງ ກ່ຽວກັບບັນຫາທີ່ສາມາດແກ້ໄຂໄດ້ ແລະ ຍັງບໍ່ສາມາດແກ້ໄຂໄດ້ ເພື່ອເອົາອອກຈາກບັນຊີຜົນການກວດສອບ-ກວດກາ ໃຫ້ໄດ້ຢ່າງຂາດຕົວ ບໍ່ໃຫ້ແກ່ຍາວ ຊຳເຮື້ອ ໂດຍສະເພາະການເກັບກູ້ລາຍຮັບ ແລະ ໜີ້ຕ້ອງຮັບຕ່າງໆ ເຫັນວ່າເປັນບັນຫາທີ່ມີຄວາມຈຳເປັນ ຕ້ອງໄດ້ເອົາໃຈໃສ່ໃນການແກ້ໄຂຢ່າງເຂັ້ມງວດ ແລະ ທັນການ ເພື່ອນຳເອົາລາຍຮັບ ແລະ ລາຍຈ່າຍທີ່ກວດເຫັນເພີ່ມ ໃນປີ 2020 ຈົດເຂົ້າແຜນງົບປະມານ ປີ 2022 ແລະ ສືບຕໍ່ເລັ່ງທວງຈາກບັນດາເປົ້າໝາຍທີ່ຖືກກວດສອບ ໃຫ້ຄົບຖ້ວນ; ພ້ອມນັ້ນ, ກໍໄດ້ສະເໜີໃຫ້ສອງອົງການ ຮີບຮ້ອນຄົ້ນຄວ້າປັບປຸງກົດໝາຍ ໃນຂົງເຂດຕົນເອງ ໃຫ້ສຳເລັດຕາມແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ພ້ອມທັງສືບຕໍ່ຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍ ໃຫ້ຄົບຖ້ວນ ແລະ ຮັດກຸມ ສາມາດຄຸ້ມຄອງໄດ້ຢ່າງທົ່ວເຖິງ.

ສະເໜີໃຫ້ 2 ອົງການ ເອົາໃຈໃສ່ສ້າງຄວາມເຂັ້ມແຂງດ້ານວິຊາສະເພາະ, ຍົກສູງຈັນຍາບັນ, ຈັນຍາທຳ ຂອງພະນັກງານ ໃຫ້ມີຄວາມຊຳນິຊຳນານ ແລະ ເປັນມືອາຊີບ, ພ້ອມທັງສະເໜີໃຫ້ລັດຖະບານ ຄົ້ນຄວ້າພິຈາລະນາງົບປະມານ ແລະ ສະໜອງເຄື່ອງມືອຸປະກອນທີ່ຈຳເປັນ ຕໍ່ວຽກງານກວດກາ ແລະ ກວດສອບ ເພື່ອທັນເປັນທັນສະໄໝ,ຮັບປະກັນໃຫ້ມີຖານຂໍ້ມູນທີ່ແນ່ນອນ ສາມາດເຊື່ອມໂຍງກັບຄັງເງິນແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອສາມາດດຳເນີນວຽກງານການກວດກາ ແລະ ການກວດສອບ ແຕ່ຫົວທີ ທັງເປັນການຫລີກລ່ຽງ ແລະ ແກ້ໄຂບັນຫາການລະເມີດວິໄນການເງິນ-ເງິນຕາ ຮັບປະກັນການສະໜອງຂໍ້ມູນໃຫ້ຄົບຖ້ວນ ແລະ ທັນຕາມກຳນົດເວລາ ເພື່ອລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ແຕ່ລະຄັ້ງ;

ນອກນັ້ນ, ສະມາຊິກສະພາແຫ່ງຊາດ ຍັງເຫັນວ່າບັນຫາຕົ້ນຕໍຂອງການແກ້ໄຂຜົນຂອງການກວດກາ ໃນໄລຍະຜ່ານມາໄດ້ໜ້ອຍນັ້ນ ສາເຫດແມ່ນຍ້ອນແກ້ໄຂໄດ້ແຕ່ທາງດ້ານບໍລິຫານເປັນສ່ວນຫລາຍ ບໍ່ໄດ້ແກ້ຕາມຂະບວນຍຸຕິທຳ ຈຶ່ງບໍ່ສາມາດແກ້ໄຂໄດ້ຢ່າງຂາດຕົວ. ສະນັ້ນ, ຖ້າໄດ້ຮັບແກ້ໄຂທາງດ້ານບໍລິຫານແລ້ວ ກໍຄວນນຳເອົາບົດບັນທຶກທີ່ໄດ້ເຊັນຮ່ວມກັບເປົ້າທີ່ຖືກກວດສອບ-ກວດກາ ໄປຈົດທະບຽນສານ ເພື່ອສາມາດດຳເນີນຕາມຂະບວນການຍຸຕິທຳ;

ສະມາຊິກສະພາແຫ່ງຊາດ ຍັງໄດ້ສະເໜີໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳອົງການຄຸ້ມຄອງເປົ້າໝາຍທີ່ຖືກກວດສອບ-ກວດກາ ຂັ້ນສູນກາງ ແລະ ທ້ອງຖິ່ນ ຮີບຮ້ອນແກ້ໄຂຜົນການກວດສອບ-ກວດກາ ຕາມບົດແນະນຳຢ່າງເຂັ້ມງວດ, ທັນການ ແລະ ຂາດຕົວ ພ້ອມທັງໃຫ້ການຮ່ວມມື, ປະສານສົມທົບ, ອຳນວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນທີ່ຈຳເປັນ ແລະ ເຂົ້າຮ່ວມວຽກງານກວດສອບ-ກວດກາ ຢ່າງຕັ້ງໜ້າ;

ສຳລັບການກຳນົດເປົ້າໝາຍ ການກວດສອບ-ກວດກາ ປະຈຳປີ 2022 ສະມາຊິກສະພາແຫ່ງຊາດ ສ່ວນຫລາຍແມ່ນເຫັນດີ ແລະ ສະເໜີໃຫ້ເອົາໃຈໃສ່ແກ້ໄຂບັນຫາທີ່ຍັງຄົງຄ້າງໃຫ້ສຳເລັດ ພ້ອມທັງເອົາໃຈໃສ່ກວດສອບ-ກວດກາ ເປົ້າໝາຍທີ່ຕິດພັນກັບວາລະແຫ່ງຊາດ, ໂຄງການລົງທຶນ ຕາມເປົ້າໝາຍພັດທະນາແບບຍືນຍົງ, ໂຄງການລົງທຶນຂອງລັດຂະໜາດໃຫຍ່, ການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ, ການປ່ອຍສິນເຊື່ອ ແລະ ໜີ້ສິນ ທີ່ບໍ່ເກີດດອກອອກຜົນ ຂອງທະນາຄານທຸລະກິດລັດ, ໂຄງການການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະ ໂຄງການແກ້ໄຂໄພພິບັດທາງທຳມະຊາດ.

ທີ່ກ່າວມານັ້ນ, ແມ່ນບາງຄຳຄິດຄຳເຫັນຂອງບັນດາທ່ານ ສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ.

ນອກຈາກນີ້, ກອງປະຊຸມ ຍັງໄດ້ມີການຊັກຖາມ ເພື່ອໃຫ້ທ່ານປະທານຂອງສອງອົງການ ຊີ້ແຈງ, ອະທິບາຍ ໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫາສຳຄັນ ແລະ ພົ້ນເດັ່ນ ທີ່ບັນດາທ່ານສະມາຊິກສະພາແຫ່ງຊາດຕັ້ງຂຶ້ນ. ເຮັດໃຫ້ການຄົ້ນຄວ້າພິຈາລະນາ ແລະ ປະກອບຄຳເຫັນຕໍ່ວຽກງານຂອງ 2 ອົງການຄັ້ງນີ້ ມີບັນຍາກາດທີ່ຟົດຟື້ນສົມຄວນ ເຊິ່ງບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດ ຈະໄດ້ນຳໄປປັບປຸງໃສ່ຮ່າງມະຕິ ເພື່ອກະກຽມໃຫ້ສະມາຊິກສະພາແຫ່ງຊາດ ລົງຄະແນນສຽງຮັບຮອງເອົາໃນວັນທີ 16 ພະຈິກ 2021 ເພື່ອນຳໄປຈັດຕັ້ງປະຕິບັດ. ພ້ອມດຽວກັນນັ້ນ, ບັນດາທ່ານ ສະມາຊິກສະພາແຫ່ງຊາດເອງ ກໍມີໜ້າທີ່ ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິດັ່ງກ່າວ ແລະ ຈະໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນໃນເທື່ອຖັດໄປ.

ອີກເທື່ອໜຶ່ງ ໃນນາມ ຄປຈ.ສພຊ, ຂໍຂອບໃຈມາຍັງບັນດາທ່ານ ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນ ໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ທີ່ໄດ້ຕິດຕາມການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້.

ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈມາຍັງພາກສ່ວນສື່ມວນຊົນທຸກສຳນັກ ລວມທັງໂທລະພາບແຫ່ງຊາດ ແລະ ວິທະຍຸກະຈາຍສຽງແຫ່ງຊາດ, ສື່ສິ່ງພິມປະເພດຕ່າງໆ ທີ່ໄດ້ຕິດຕາມຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ.

ລັດຖະສະພາສາກົນ

# ຕວກກີຫລຸດຄ່າໄຟຟ້າ ຊ່ວຍຜູ້ບໍລິໂພກ

# ນາກ ເມືອງມະໄນ



ໃນວັນທີ 9 ພະຈິກ 2021 ໄດ້ມີການລາຍງານຂ່າວໃຫ້ຮູ້ວ່າ: ທ່ານ ເຫຍີບ ເອຣໂດກັນ ປະທານາທິບໍດີຕວກກີ ໄດ້ກ່າວຄຳປາໄສຕໍ່ສະມາຊິກລັດຖະສະພາຈາກພັກເອເຄຂອງທ່ານ ໃນໄລຍະກອງປະຊຸມທີ່ລັດຖະສະພາຕວກກີ ໃນນະຄອນຫລວງອັງກາຣາ ປະເທດຕວກກີ.

ທ່ານ ເຫຍີບ ເອຣໂດກັນ ປະທານາທິບໍດີຕວກກີ ກ່າວວ່າ: ຕວກກີຈະຍົກເລີກການຊໍາລະເງິນຄົງທີ່ ຈໍານວນສອງຄັ້ງສໍາລັບຄ່າໄຟຟ້າເພື່ອຊ່ວຍເຫລືອຜູ້ບໍລິໂພກ ທັງກ່າວຕື່ມວ່າ ລັດຖະບານຂອງທ່ານໄດ້ອຸດໜູນຄ່າໄຟຟ້າບາງສ່ວນແລ້ວ.

ທ່ານ ເຫຍີບ ເອຣໂດກັນ ຈະມີການເລືອກຕັ້ງບໍ່ກາຍກາງປີ 2023 ແລະ ຄະແນນການອະນຸມັດຂອງທ່ານໄດ້ຮັບຜົນກະທົບຈາກອັດຕາເງິນເຟີ້ເກືອບ 20% ຂອງຕວກກີ ດ້ວຍການເພີ່ມຂຶ້ນເມື່ອບໍ່ດົນນີ້ໃນສິນຄ້າຫລັກຄື: ອາຫານ ແລະ ແກັສ.

ເຈົ້າໜ້າທີ່ກ່ຽວຂ້ອງໃຫ້ຮູ້ວ່າ: ໃນອາທິດຜ່ານມາ ນະຄອນຫລວງອັງກາຣາ ກໍາລັງກະກຽມຊຸດສະໜັບສະໜູນທາງດ້ານການເງິນເພື່ອຊ່ວຍຄອບຄົວທີ່ມີລາຍໄດ້ຕໍ່າ ດ້ວຍມາດຕະການເຊັ່ນ ການເພີ່ມຄ່າຈ້າງຂັ້ນຕໍ່າ, ຫລຸດຜ່ອນຄ່າໃຊ້ຈ່າຍດ້ານພະລັງງານ ແລະ ເພີ່ມເງິນເດືອນໃຫ້ແກ່ພະນັກງານ-ລັດຖະກອນບາງຄົນ.

ທ່ານ ເຫຍີບ ເອຣໂດກັນ ກ່າວຫລັງຈາກກອງປະຊຸມຄະນະລັດຖະບານວ່າ: ລັດຖະບານຈະຍົກເລີກການຊໍາລະເງິນຄົງທີ່ 2% ຂອງໃບບິນຄ່າໄຟຟ້າສໍາລັບການລະດົມທຶນຂອງສະຖານີໂທລະທັດ TRT ແລະ ການຈ່າຍເງິນອີກ 1% ທີ່ຄິດຄ່າທໍານຽມສໍາລັບການຄ້າງຈ່າຍຄ່າໄຟຟ້າ ໂດຍບໍ່ໃຫ້ມີຜົນກະທົບຕໍ່ຄວາມດຸ່ນດ່ຽງຂອງບໍລິສັດໃນຂະແໜງພະລັງງານ ຫລືເຮັດໃຫ້ພົນລະເມືອງຂອງພວກເຮົາຕົກເປັນເຫຍື່ອ ພວກເຮົາຈະສືບຕໍ່ຮັບມືກັບວິກິດການດ້ານພະລັງງານທົ່ວໂລກນີ້.

**ແຫລ່ງຂ່າວ: Reuters**

ກົດໝາຍຕ່າງປະເທດ

# ສະພາອີຢູ ພິຈາລະນາການອອກກົດໝາຍກ່ຽວກັບອອນລາຍ

# ນາງ ປາກາລັກ ພົມມີໄຊ

*ສະມາຊິກລັດຖະສະພາອີຢູ ຈະປຶກສາຫາລືກ່ຽວກັບການປະຕິບັດດ້ານເຕັກໂນໂລຢີຂະໜາດໃຫຍ່ທີ່ເປັນອັນຕະລາຍ ຮ່ວມກັບອະດີດພະນັກງານເຟສບຸກ ເຊິ່ງຄຳໃຫ້ການຂອງລາວ ຈະສົ່ງຜົນຕໍ່ການອອກກົດໝາຍຂອງສະຫະພາບເອີຣົບ (ອີຢູ) ໃນອະນາຄົດ.*

ອີງຕາມການລາຍງານຂ່າວ ໃນວັນທີ 8 ພະຈິກ 2021 ໃຫ້ຮູ້ວ່າ: ອະດີດພະນັກງານເຟສບຸກ ໄດ້ເປີດເຜີຍກ່ຽວກັບການປະຕິບັດຂອງບໍລິສັດທີ່ເປັນອັນຕະລາຍຕໍ່ຜູ້ໃຊ້ ແລະ ສັງຄົມ. ຕໍ່ກັບບັນຫານີ້, ສໍາລັບອີຢູ ຄວາມປອດໄພທາງອອນລາຍເປັນສິ່ງສໍາຄັນອັນດັບທໍາອິດສໍາລັບລັດຖະສະພາ ເຊິ່ງກໍາລັງດໍາເນີນຕາມກົດໝາຍໃໝ່ ກ່ຽວກັບໂລກອອນລາຍທີ່ມີການປ່ຽນແປງຢ່າງໄວວາ ເພື່ອຮັບປະກັນດ້ານສະພາບແວດລ້ອມດິຈິຕອນທີ່ດີກວ່າ ແລະ ປອດໄພກວ່າສໍາລັບຜູ້ໃຊ້ອິນເຕີເນັດໃນອີຢູ ແລະ ສະພາບແວດລ້ອມການແຂ່ງຂັນທີ່ຊ່ວຍໃຫ້ທຸລະກິດຈະເລີນເຕີບໂຕ.

ທ່ານ ຄິສຕໍ ຊານເດໂທເຊ ຫົວໜ້າສະມາຊິກລັດຖະສະພາ ກ່ຽວກັບກົດໝາຍວ່າດ້ວຍການບໍລິການດິຈິຕອນ ກ່າວວ່າ ອັນທໍາອິດ, ຂ້າພະເຈົ້າຄິດວ່າ ຜູ້ໃຊ້ເຟສບຸກທຸກຄົນຄວນຮູ້ ແລະ ເຂົ້າໃຈຮູບແບບທຸລະກິດ ແລະ ຕົວເລືອກເບື້ອງຫລັງການເຮັດວຽກຂອງແຟັດຟອມໃນລະດັບສູງສຸດ, ອັນທີສອງ ການເປີດເຜີຍເຫລົ່ານັ້ນ ຈະສົ່ງຜົນກະທົບຕໍ່ໜ່ວຍງານສືບສວນ, ການບໍລິການດິຈິຕອນ ແລະ ຜູ້ໃຊ້ເຟສບຸກ ແລະ ແຟັດຟອມອື່ນໆ ໃນເອີຣົບໃນອະນາຄົດອັນໃກ້ນີ້.

ທ່ານ ເອັນເດຣີ ຊະວາບ ສະມາຊິກລັດຖະສະພາ ຜູ້ຮັບຜິດຊອບຕໍ່ກົດໝາຍວ່າດ້ວຍການຕະຫລາດດິຈິຕອນ ກ່າວເສີມວ່າ: “ເຟສບຸກມີບົດບາດຫລາຍໃນສັງຄົມສະໄໝໃໝ່ ສະແດງໃຫ້ຜູ້ໃຊ້ເຫັນໂຄສະນາທາງການເມືອງ ແລະ ເນື້ອໃນທາງການເມືອງຕາມຂໍ້ມູນສ່ວນບຸກຄົນຂອງພວກເຮົາ ແລະ ກົດຂອງມັນ ສາມາດປ່ຽນລະດັບສຽງໄດ້”.

**ແຫລ່ງຂ່າວ: EU Reporter**






ຕໍ່ຈາກໜ້າ 5...

ນົດໄວ້ໃຫ້ມີປະສິດທິພາບສູງ ສາມາດຈັດຕັ້ງປະຕິບັດ ຕາມທິດທາງ ແລະ ແຜນການເຄື່ອນໄຫວວຽກງານແຜນການປີ 2022 ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງກໍຄືແຜນການເຄື່ອນໄຫວ ປີ 2022 ຂອງສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໃຫ້ປາກົດຜົນເປັນຈິງນັ້ນ ຈຶ່ງກໍານົດທິດທາງ ແລະ ແຜນການເຄື່ອນໄຫວວຽກງານ ຈຸດສຸມໃນຕໍ່ໜ້າຂອງຕົນ ກ່ຽວກັບການປະຕິບັດ 3 ພາລະບົດບາດຄື:

**1. ການປະຕິບັດພາລະບົດບາດດ້ານນິຕິບັນຍັດ**

1.1 ເຂົ້າຮ່ວມກອງປະຊຸມສະໄໝສາມັນຄັ້ງຕໍ່ຂອງສະພາແຫ່ງຊາດ ເພື່ອຮ່ວມຄົ້ນຄວ້າ, ປະກອບຄໍາເຫັນໃສ່ບັນດາຮ່າງກົດໝາຍ, ຮ່າງມະຕິ ແລະ ລົງຄະແນນສຽງຮັບຮອງດ້ວຍຄວາມຮັບຜິດຊອບສູງ;

1.2 ກວດກາຄືນບັນດາກົດໝາຍ, ນິຕິກໍາໃນຂົງເຂດກົດໝາຍວ່າສອດຄ່ອງກັບພຶດຕິກໍາຕົວຈິງ ຫລືບໍ່. ຄວນປັບປຸງ, ຮັບຮອງຄືນຄືແນວໃດ ແລະ ຄົ້ນຄວ້າຮັບຮອງເອົານິຕິກໍາຕາມຄວາມຕ້ອງການຂອງຂອງສັງຄົມ;

1.3 ນໍາເອົາບັນດາກົດໝາຍ, ນິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບຂົງເຂດກົດໝາຍໄປເຜີຍແຜ່, ໃຫ້ພາກສ່ວນຜູ້ປະກອບການ ຮັບຮູ້ ແລະ ເຊື່ອມຊຶມໃຫ້ກວ້າງຂວາງ.

**2. ການປະຕິບັດພາລະບົດບາດ ໃນການຕົກລົງບັນຫາສໍາຄັນຂອງຊາດ ແລະ ຂອງແຂວງ:**

ຍົກສູງພາລະບົດບາດໃນການເປັນຕົວແທນແຫ່ງສິດ, ຜົນປະໂຫຍດຂອງປະຊາຊົນ ໃນການຄົ້ນຄວ້າພິຈາລະນາຕົກລົງບັນຫາສໍາຄັນພື້ນຖານຂອງຊາດ ຮັບປະກັນໃຫ້ການຕົກລົງບັນຫາຕ່າງໆ ມີຄວາມຖືກຕ້ອງຕາມກົດໝາຍ, ນໍາເອົາຜົນປະໂຫຍດສູງສຸດມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າ ໂດຍປະສານສົມທົບ ແລະ ຊຸກຍູ້ກະຊວງກ່ຽວຂ້ອງ ສຸມໃສ່ໃນການຄົ້ນຄວ້າ ເພື່ອສະເໜີໃຫ້ສະພາແຫ່ງຊາດ ຊຸດທີ IX ແລະ ພິຈາລະນາຮັບຮອງບັນຫາທີ່ສໍາຄັນພື້ນຖານ ເປັນຕົ້ນແມ່ນການພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ວຽກງານສໍາຄັນອື່ນໆ.

**3. ການປະຕິບັດພາລະບົດບາດໃນການຕິດຕາມກວດກາ**

ຍົກສູງພາລະບົດບາດຕິດຕາມກວດກາ ໃນການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄືແຜນພັດທະນາເສດຖະກິດ-ສັງຄົມປະຈໍາປີຂອງແຂວງ, ເອົາໃຈໃສ່ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານ ພາຍໃນເຂດເລືອກຕັ້ງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍສຸມໃສ່ບັນຫາທີ່ເຄັ່ງຮ້ອນ-ຮີບດ່ວນທີ່ປະຊາຊົນມີຄວາມສົນໃຈ, ການປະຕິບັດມະຕິທີ່ເປັນວາລະແຫ່ງຊາດ ແລະ ບັນຫາທີ່ມີຜົນກະທົບຕໍ່ສິດຜົນປະໂຫຍດຂອງປະຊາຊົນ ເຊັ່ນ: ການແກ້ໄຂບັນຫາຜົນກະທົບຈາກການຈັດຕັ້ງປະຕິບັດໂຄງການຕ່າງໆ, ການແກ້ໄຂຄໍາຮ້ອງຂໍຄວາມເປັນທໍາຂອງປະຊາຊົນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ ພ້ອມທັງຕິດຕາມກວດກາຜົນຂອງການແກ້ໄຂບັນຫາດັ່ງກ່າວ.